ໂຄງການ
ປົກປັກຮັກສາ
ໜັງສືໃບລານລາວ
*ການຮ່ວມມື ລາວ-ເຢຍຣະມັນ*

# ຂ່າວໃບລານ

ປີທີ IX ສະບັບທີ 19 ທັນວາ 2001

PRESERVATION OF LAO MANUSCRIPTS PROGRAMME
LAO-GERMAN COOPERATION. NEWS BULLETIN ✷ December 2001



## ກອງປະຊຸມທີ່ ແຂວງ ສະຫວັນນະເຂດ

*ໂດຍ : ຄຳສິງ ວົງສະຫວ່າງ*

ຕອນເຊົ້າຂອງວັນທີ 5 ເມສາ ຄ.ສ. 2000 ຢູ່ທີ່ສະໂມສອນພໍ່ກະດວດແຂວງສະຫວັນນະເຂດ ໄດ້ມີພິທີໄຂກອງປະຊຸມວິຊາການປົກປັກຮັກສາໜັງສືໃບລານ ຂຶ້ນຢ່າງເປັນທາງການ ໂດຍມີ **ທ່ານອິນປົງ ໄຂ້ຍະວົງ** ເລຂາພັກແຂວງເຈົ້າແຂວງສະຫວັນນະເຂດ ເປັນປະທານກອງປະຊຸມ ທ່ານ**ນາງ ກິງເດືອນ ເນດຕະວົງ** ອຳນວຍການຫໍສະໝຸດແຫ່ງຊາດທັງເປັນຫົວໜ້າ ໂຄງການປົກປັກຮັກສາໜັງສືໃບລານລາວ, **ທ່ານ ສາສະດາຈານ ດຣ. ຮະຣັນ ຮຸນດິອຸສ** ຊ່ຽວຊານເຢຍຣະມັນ ທີ່ປຶກສາກິຕິມະສັກປະຈຳໂຄງການໃບລານລາວ ຕາງໜ້າສະຖານທູດເຢຍຣະມັນປະຈຳລາວ. ໃຫ້ກຽດເຂົ້າຮ່ວມກອງປະຊຸມຍັງມີທ່ານ **ດຣ. ສຸເນດ ໂພທິສານ** ພະນັກງານຊ່ຽວຊານ ແລະ **ທ່ານ ກະວິນ ກຽງຄຳຊົນນີ** ຮອງຫົວໜ້າກົມພິມຈຳໜ່າຍ ແລະ ຫໍສະໝຸດ ເປັນຜູ້ຕາງໜ້າໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ. **ຍາທ່ານ ຍານ ເຕວິໄຊ** ຮອງປະທານ ອົງການພຸທສາສນາສຳພັນ ແຂວງສະຫວັນນະເຂດ, ບັນດາຫົວໜ້າ ແລະ ຮອງຜະແນກຖະແຫລງຂ່າວ ແລະ ວັດທະນະທຳ ພ້ອມດ້ວຍ ອ.ພ.ສ. ແຕ່ລະເມືອງ ໃນ 15 ເມືອງ. ນອກນັ້ນ ຍັງມີບັນດາ

➡



ປັນດາຜູ້ແທນຈາກພາກສ່ວນຕ່າງໆເຂົ້າຮ່ວມ

ອົງການຈັດຕັ້ງມະຫາຊົນ ອ້ອມຂ້າງແຂວງເຂົ້າຮ່ວມຢ່າງພ້ອມພຽງລວມທັງຫມົດມີ 70 ຄົນ.

ກອງປະຊຸມຄັ້ງນີ້ໄດ້ເປີດກວ້າງການສົນທະນາກ່ຽວກັບວຽກງານປົກປັກຮັກສາວັດທະນະທຳ ໂດຍສະເພາະແມ່ນຫນັງສືຜູກໃບລານ. ແຕ່ລະທ່ານໄດ້ສະແດງຄວາມຄິດຄວາມເຫັນຢ່າງກົງໄປກົງມາ ທັງໃຫ້ຄຳຫມັ້ນສັນຍາຈະຮ່ວມມືກັບໂຄງການເປັນຢ່າງດີ. ຫລາຍທ່ານໄດ້ຮຽກຮ້ອງ ໃຫ້ມີການສຳຫລວດໂດຍໄວ ເພື່ອກອບກູ້ເອົາມໍລະດົກອັນລ້ຳຄ່ານີ້ໄວ້ໃຫ້ຢູ່ບ່ອນປອດໄພ. ກອງປະຊຸມດຳເນີນໄປເປັນເວລາ 3 ວັນ ແລະ ໄດ້ອັດລົງຢ່າງມີຜົນດີທຸກປະການ.




ຖ່າຍຮູບເປັນທີ່ລະລຶກ

❤ ❤ ❤

## ໂຄງປູກຝຶດປະຈຳວັນ

*ຄັດໂຮມຈາກໃບລານວັດນາໃໝ່ ເມືອງມະຫາໄຊ ແຂວງຄຳມ່ວນ*
*(ໂດຍ:ຄຳສິງ ວົງສະຫວ່າງ)*

| | | |
|---|---|---|
| ວັນ ອາທິດ | : | ເປັນຮາກເຫງົ້າທົ່ວດີ |
| ວັນ ຈັນ | : | ເຄືອຍາວຮີບໍ່ມົ້ວ |
| ວັນ ອັງຄານ | : | ເປັນພົ້ວໝາກດົກໜາ |
| ວັນ ພຸດ | : | ມີມາລາບໍ່ເສົ້າ |
| ວັນ ພະຫັດ | : | ມີໝາກເຄົ້າເທົ້າເຖິງປາຍ |
| ວັນ ສຸກ | : | ເປືອກໜາຫລາຍສຸດຍິ່ງ |
| ວັນ ເສົາ | : | ມີກ້ານກິ່ງລຳງາມ |

## ເຊີນອ່ານ


- ຄຳປະກາດກຽດຕິຄຸນ ຫນ້າ 3
- ກອງປະຊຸມທີ່ບ້ານຊອກ 5
- ສຽງຈາກຊາວຈຳພອນ 6
- ນັກສຳຫລວດ...... 8
- ການສຳຫລວດ.... 12
- ເມືອງໃໝ່ໄຊພູທອງ 13
- ມອບປື້ມຂອບໃຈ..... 14
- ເມືອງຈຳພອນ..... 16
- ສືບຕໍ່ອາຍຸຄົ້ນລານ 19

# ຄຳປະກາດກຽດຕິຄຸນ
# ສາສດາຈານ ດຣ. ຣະຣັບ ຣຸບດິອຸສ
## ສິລະປະສາດດຸສດີບັນດິດກິດຕິມະສັກ
## (ພາສາ ແລະ ວັນນະກຳລ້ານນາ)

***ສາສດາຈານ ດຣ.ຣະຣັບ ຣຸບດິອຸສ*** (*Professor Dr.Harald Hundius*) ສຳເລັດການສຶກສາຂັ້ນປະຣິນຍາເອກ ສາຂາວິຊາອັກສອນສາດຕະເວັນອອກ (**ວິຊາເອກພາສາໄທ**)ສາຂາປະຫວັດສາດ ແລະ ວັດທະນະທຳຕາເວັນອອກສ່ຽງໃຕ້(**ວິຊາ ໂທພາສາອິນໂດເນເຊຍ**) ສາຂາວິຊາພາຣະຕະວິທະຍາ (**ວິຊາ ຕຣີ ພາສາບາລີ-ສັນສະກິດ**) ຈາກມະຫາວິທະຍາໄລ ແຟຣງເຟຣິດປະເທດສະຫະພັນສາທາຣະນະລັດເຢຍຣະມັນ. ປະຈຸບັນຮັບຕຳແໜ່ງສາສດາຈານ ປະຈຳ ສາຂາວິຊາ **Language and Litera- ture of Thailand and Laos** ມະຫາວິທະຍາໄລພັຊເຊົາ ( **Passau** ) ປະເທດສະຫະພັນສາທາຣະນະລັດເຢຍຣະມັນ.



***ສາສດາຈານ ດຣ.ຣະຣັບ ຣຸບດິອຸສ*** ເປັນຜູ້ມີບົດບາດສຳຄັນຍິ່ງ ໃນການລິເລີ່ມ ແລະດຳເນີນໂຄງການຄວາມຮ່ວມມືລະຫວ່າງມະຫາວິທະຍາໄລຊຽງໃໝ່ກັບມະຫາວິທະຍາໄລ ພັຊເຊົາ ( Passau ) ປະເທດສະຫະພັນສາທາຣະນະລັດເຢຍຣະມັນ ໃນການແລກປ່ຽນ ອາຈານນັກວິໄຈ ແລະ ນັກສຶກສາ ຕະຫລອດຈົນການສະໜັບສະໜູນຄວາມຮ່ວມມືດ້ານການສອນ ແລະ ການວິໄຈ ນອກຈາກນີ້ຍັງເປັນຜູ້ຮ່ວມກໍ່ຕັ້ງຫລັກສູດບັນດິດສຶກສາ ດ້ານພາສາ ແລະ ວັນນະກຳລ້ານນາ ຂອງຄະນະມະນຸດສາດມະຫາວິທະຍາໄລຊຽງໃໝ່ (ພ.ສ 2525 - 2528) ເປັນອາຈານພິເສດ ເປັນທີ່ປຶກສາງານວິໄຈ ແລະຜູ້ສອບວິທະຍານິພົນ ຂອງຫລັກສູດສິນລະປະສາດມະຫາບັນດິດ ສາຂາວິຊາພາສາ ແລະ ວັນນະກຳລ້ານນາ ຂອງຄະນະມະນຸດສາດມະຫາວິທະຍາໄລຊຽງໃໝ່ (ພ.ສ 2529 ເຖິງປະຈຸບັນ)

***ສາສດາຈານ ດຣ.ຣະຣັບ ຣຸບດິອຸສ*** ເປັນຜູ້ມີຄວາມຊ່ຽວຊານພິເສດດ້ານພາສາ ແລະ ວັນນະກຳລ້ານນາ. ມີຜົນງານດີເດັ່ນຈົນເປັນທີ່ຍອມຮັບໃນວົງວິຊາການ ເຊັ່ນ: ການສຳຫລວດ ອະນຸລັກ ແລະ ບັນທຶກເອກະສານວັນນະກຳລ້ານນາ ໃນຮູບແບບໄມໂຄຣຟິມ. ການສຶກສາວິເຄາະວັນນະກຳລ້ານນາ ການສຶກສາຄຳພີ ເລື່ອງ**ປັນຍາສະຊາດົກ (50ຊາດ)** ຮ່ວມກັບນັກວິຊາການມະຫາວິທະຍາໄລຊຽງໃໝ່ (ພ.ສ 2526-2535) ແລະ ຍັງເປັນຜູ້ປະສານງານທີ່ສຳຄັນໃນໂຄງການປົກປັກຮັກສາຄຳພີໃບລານ ຂອງປະເທດສາທາຣະນະລັດປະຊາທິປະໄຕປະຊາຊົນລາວ ພ.ສ 2535-2545 ອີກດ້ວຍ. ໃນສ່ວນທີ່ກ່ຽວຂ້ອງມະຫາວິທະຍາໄລຊຽງໃໝ່ ສາສດາຈານ ດຣ.ຣະຣັບ ຣຸບດິອຸສ ເປັນຜູ້ມີສ່ວນສຳຄັນຍິ່ງ ໃນການປະສານງານກັບອົງກອນໃນປະເທດສະຫະພັນສາທາຣະນະລັດເຢຍຣະມັນ ເພື່ອຂໍທຶນມາດຳເນີນງານໃນໂຄງການສຳຄັນໆຂອງມະຫາວິທະຍາໄລຊຽງໃໝ່ດັ່ງນີ້ :

1/. ໂຄງການອະນຸລັກຄຳພີໃບລານລ້ານນາ ແລະ ຖ່າຍໄມໂຄຣຟິມ (ພ.ສ 2529-2533) ໂດຍມີສູນສົ່ງເສີມສິລະປະວັດທະນະທຳມະຫາວິທະຍາໄລຊຽງໃໝ່ເປັນຜູ້ຮັບຜິດຊອບໂຄງການ.

2/. ໂຄງການນິເວສວິທະຍາ (ພ.ສ 2539-2542) ໂດຍມີສະຖາບັນວິໄຈສັງຄົມ ມະຫາວິທະຍາໄລຊຽງໃໝ່ ເປັນຜູ້ຮັບຜິດຊອບໂຄງການ.

3/. ໂຄງການຊີວິດໃນອະດີດ (ພ.ສ 2539 - 2543) ໂດຍມີສຳນັກສົ່ງເສີມສິລະປະວັດທະນະທຳ ມະຫາວິທະຍາໄລຊຽງໃໝ່ ຮ່ວມກັບກຸ່ມສະຖາບັນອຸດົມສຶກສາພາກເໜືອ ເປັນຜູ້ຮັບຜິດຊອບໂຄງການ.

4/. ໂຄງການສຶກສາວິໄຈທ່ອງທ່ຽວ(ພ.ສ 2543-2546) ໂດຍມີສາຂາວິຊາການທ່ອງທ່ຽວ ຄະນະມະນຸດສາດ ມະຫາວິທະຍາໄລຊຽງໃໝ່

➡

ເປັນຜູ້ຮັບຜິດຊອບໂຄງການ ( ຢູ່ໃນລະຫວ່າງດຳເນີນການ ).

**ສາສດາຈານ ດຣ.ຣະຣັບ ຣຸບດິອຸສ** ເປັນຜູ້ທີ່ໄດ້ອຸທິດຄວາມຮູ້ ເວລາ ແລະ ກຳລັງຄວາມສາມາດ ໃຫ້ແກ່ມະຫາວິທະຍາໄລຊຽງໃຫມ່ ມາຢ່າງຕໍ່ເນື່ອງ ໄດ້ເລີ່ມສ້າງສັນໂຄງການດ້ານວິຊາການຕ່າງໆ ທີ່ສົ່ງຜົນຕໍ່ການສຶກສາພາສາ ແລະ ວັນນະກຳລ້ານນາ ຕະຫລອດຈົນຄວາມ ຮູ້ທີ່ເປັນສະຫະສາຂາວິຊາທີ່ເປັນປະໂຫຍດຕໍ່ມະຫາວິທະຍາໄລຊຽງໃຫມ່ ຄວາມຮູ້ຄວາມສາມາດດ້ານພາສາ ແລະ ວັນນະກຳລ້ານນາ ຂອງສາສດາຈານ **ດຣ.ຣະຣັບ ຣຸບດິອຸສ** ເປັນທີ່ຍອມຮັບ ແລະຍົກຍ້ອງຢ່າງກວ້າງຂວາງ ໃນລະດັບນາໆຊາດ ຊຶ່ງມີຜົນດີຍິ່ງຕໍ່ການຕິດຕໍ່ປະສານງານ ແລະການລິເລີ່ມໂຄງການຮ່ວມມືຕ່າງໆ ລະຫວ່າງມະຫາວິທະຍາໄລຊຽງໃຫມ່ກັບມະຫາວິທະຍາໄລສ່ວນຣາຊການ ແລະຫນ່ວຍງານໃນປະເທດສະຫະພັນສາທາຣະນະລັດເຢຍຣະມັນຢ່າງຫລວງຫລາຍ.

ໂດຍເຫດທີ່ **ສາສດາຈານ ດຣ. ຣະຣັບ ຣຸບດິອຸສ** ເປັນຜູ້ມີຄຸນນະວຸດທິທາງວິຊາການທີ່ມີຜົນງານດີເດັ່ນທາງດ້ານພາສາ ແລະ ວັນນະກຳລ້ານນາຈົນເປັນທີ່ປະຈັກຢ່າງຊັດເຈນແກ່ຄະນາຈານນັກວິໄຈ ນັກສຶກສາ ແລະ ຜູ້ບໍລິຫານລະດັບຕ່າງໆ ຂອງມະຫາວິທະຍາໄລຊຽງໃຫມ່ ຕະຫຼອດຈົນສະຖາບັນການສຶກສາອື່ນໆ ຂອງປະເທດ ແລະຍັງເປັນຜູ້ທີ່ໃຫ້ຄວາມຊ່ວຍເຫລືອ ແລະ ອຸທິດຕົນໃນການທຳຄຸນປະໂຫຍດໃຫ້ແກ່ມະຫາວິທະຍາໄລຊຽງໃຫມ່ ຈຶ່ງມີມະຕິໃຫ້ໄດ້ຮັບພະຣາຊທານ**ປະຣິນຍາສິລະປະສາດດຸສດີບັນດິດກິຕິມະສັກ (ພາສາແລະວັນນະກຳລ້ານນາ)** ເພື່ອໃຫ້ເປັນກຽດປະຫວັດສືບຕໍ່ໄປ.

**<u>ຫມາຍເຫດ</u>** :

**ສາສດາຈານ ດຣ. ຣະຣັບ ຣຸບດິອຸສ** ເປັນຊ່ຽວຊານພິເສດທີ່ປຶກສາກິຕິມະສັກ ຂອງໂຄງການປົກປັກຮັກສາໃບລານລາວ (ການຮ່ວມມືລາວ-ເຢຍຣະມັນ) ນັບແຕ່ ຄ.ສ 1992 ຈົນເຖິງປັດຈຸບັນ.

---

# ສຸພາສິດ

*ກ່າຍຈາກຫນັງສືໃບລານວັດໃຫມ່*
*ສຸວັນນະພູມຫລວງພະບາງ*
*ກ່າຍໂດຍ ພ.ທົງສັກສິດ*

- ເມືອງໃດນັ້ນໄຮ້ນັກປາດແປທັມ
- ນາຣີໄຮ້ຜົວຮຽງນອນແນບ
- ມີເງິນບໍ່ມີຄຳເຝົ້າແສນຊິວອນກໍບໍ່ຢູ່
- ຄຳບໍ່ແມ່ນຄຳແທ້ຫາກແປໄປເປັນກົ່ວ
- ຟັງຄວາມຄົນພາຕົນເສົ້າໂສກ
- ຟັງຄວາມເອົາທັງທຸກທັງຍາກ
- ອາຫານເຕັມພາເຂົ້າ
- ຢ່າໄດ້ກິນແຕ່ຊີ້ນ
- ໂລກນີ້ປິ່ນເຫມືອນດັ່ງກົງກວຽນ
- ຊາດທີ່ເປັນຄົນນີ້ ທຳຕົນໃຫ້ສົມຄ່າ
- ຄົນໂງ່ໄດ້ເປັນຄູຄົນສະຫລາດ
- ຄອຍແຕ່ບຸນມາຄ້ຳ
- ນາດວ່າເຫດແລ່ນຕອ້ງ

ເຫມືອນດັ່ງແຫວນທຳມະໂຮງໄຮ້ພິທູນປະດັບເອ້
ເຫມືອນດັ່ງສະມະນະເຈົ້າໄຮ້ສິນສ້າງບໍ່ຮອນງາມ
ມີຄຳບໍ່ມີອື່ນອ້ອຍອອຍໄວ້ກໍບໍ່ຟັງ
ກົວແຕ່ຂອງຫມູ່ນັ້ນ ລາຄາຊ້ຳເຊື່ອມລົງ
ໃຜຢາກໂຊກໃຫ້ພາກພຽນເອົາ
ບໍ່ຕ້ອງຄິດລຳບາກເອົາຕົນເພິ່ງຕົນ
ຕາມີໃຫ້ຫລຽວເບິ່ງທ່ານເອີຍ
ປານັ້ນໃຫ້ລ່ຳແລ ແດ່ເນີ
ໃຜຫາກມີຄວາມພຽນ ຈຶ່ງຊິເຫັນສະຫວັນໄດ້
ແມ່ນຈັກດັບຊີບສິ້ນ ນາມນັ້ນກໍຫາກຍັງຢູ່ນາ
ເຖິງວ່າຜູ້ສະຫລາດຮູ້ກໍເຄີຍໄດ້ໂງ່ມາ
ບໍ່ທຳເອົາຈັກເທື່ອ ເບື່ອເດ
ຂໍຮ້ອງຕັ້ງແຕ່ບຸນ

# ກອງປະຊຸມທີ່ ບ້ານຊອກ

ໂດຍ: ຄຳສິງ ວົງສະຫວ່າງ

**ໃນ** ວັນທີ 5 ພະຈິກ 2000 ຢູ່ທີ່ວັດໂພໄຊ ບ້ານຊອກເຫນືອ ເມືອງຄັນທະບູລີ ແຂວງສະຫວັນນະເຂດ ໄດ້ມີພິທີເປີດປັ້ນສຳມະນາລະດັບທ້ອງຖິ່ນຂຶ້ນ ກ່ອນການສຳຫລວດຫນັງສືໃບລານ ໂດຍມີຜູ້ເຂົ້າຮ່ວມດັ່ງນີ້ :



▲ ຊາວບ້ານຊອກ ຕ້ອນຮັບ ທ່ານ ກຣິສຈຽນ ເບີຣເກີ ພ້ອມດ້ວຍພັນລະຍາ



▲ ທ່ານ ດຣ. ຈັນທະພິລິດ ຈຽມສີສຸລາດ ຕາງພ້າ ກ/ຊ ຖ/ວ ໂອ້ລົມກັບປ/ຊ ເຂດບ້ານຊອກ



- ທ່ານ ດຣ. ຈັນທະພິລິດ ຈຽມສີສຸລາດ ຫົວຫນ້າກົມພິມຈຳຫນ່າຍ ຕາງຫນ້າກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

- ທ່ານ ກຣິສຈຽນ ເບີຣ໌ເກີ ເອກອັກຄະລັດຖະທູດ ສ.ສ.ເຢຍຣະມັນປະຈຳລາວ ພ້ອມດ້ວຍພັນລະຍາ

- ທ່ານ ນາງ ກົງເດືອນ ເນດຕະວົງ ອຳນວຍການຫໍສະຫມຸດແຫ່ງຊາດ ທັງເປັນຫົວຫນ້າໂຄງການປົກປັກຮັກສາຫນັງສືຜູກໃບລານລາວ.

- ທ່ານ ນາງ ດາລາ ກັນລະຍາ ກຳມະການປະຈຳສູນກາງແນວລາວສ້າງຊາດ ທີ່ປຶກສາປະຈຳໂຄງການປົກປັກຮັກສາຫນັງສືໃບລານ

- ທ່ານ ບຸນຍົງ ໄຊປັນຍາ ຮອງຫົວຫນ້າຖະແຫລງຂ່າວ ແລະ ວັດທະນະທຳແຂວງສະຫວັນນະເຂດ

- ທ່ານ ສີພໍ ວິມະໄລທອງ ຮອງເຈົ້າເມືອງງຄັນທະບູລີ. ພ້ອມດ້ວຍພະສົງສຳມະເນນ, ພໍ່ແມ່ເຖົ້າແກ່ແນວໂຮມ ຊາວບ້ານຊອກທັງສາມຫມູ່ບ້ານມີຈຳນວນ 89 ຄົນ ເຂົ້າຮ່ວມຮັບຟັງປາກະກະຖາສິນທະນາແລກປ່ຽນຄວາມຄິດເຫັນກ່ຽວກັບວຽກປົກປັກຮັກສາຫນັງສືໃບລານ. ຈາກນັ້ນ ຊາວບ້ານກໍ່ໄດ້ຈັດພິທີບາສີໃຫ້ແກ່ ທ່ານເອກອັກຄະລັດຖະທູດ ສ.ສ. ເຢຍຣະມັນ ພ້ອມດ້ວຍພັນລະຍາ ແລະ ຄະນະໂຄງການໃບລານ. ໃນວັນດຽວກັນທ່ານທູດຍັງໄດ້ໄປມອບປຶ້ມອ່ານກ່ຽວກັບວັດທະນະທຳ ຫລວງພະບາງໃຫ້ແກ່ຄະນະຄູອາຈານ ແລະ ນັກຮຽນ ຢູ່ທີ່ໂຮງຮຽນມັດທະຍົມເມືອງຄັນທະບູລີອີກດ້ວຍ.

ບ້ານຊອກເຫນືອເປັນບ້ານດັ້ງເດີມຊຶ່ງຕັ້ງມາໄດ້ຫລາຍຮ້ອຍປີ, ອາຊີບຕົ້ນຕໍ

ອ່ານຕໍ່ໜ້າ 20

◀ ທ່ານ ກຣິສຈຽນເບີຣເກີ ເອກອັກຄະລັດຖະທູດ ສສຢ ປະຈຳລາວ ມອບປຶ້ມໃຫ້ ຄູອາຈານໂຮງຮຽນ ມັດທະຍົມເມືອງ ຄັນທະບູລີ

# ສຽງຈາກຊາວຈຳພອນ

ໂດຍ : ບຸນຕຸ້ມ ສີປັນຍາ

* ຊາວຈຳພອນທົ່ວໜ້າ
ທີ່ໂຄງການໃບລານ
ກ/ວ ເມືອງປະສານໄວ້
ລູກຫລານວິຊາການໄປຮອດແລ້ວ

ພາກັນກ່າວຍິນດີ
ລາດຕະເວນຕາມບ້ານ
ບ້ານໃດມີໜັງສືຜູກ
ແຊວມາຕ້ອນອັ່ງອໍ

* ພໍໄປເຖິງແຕ່ລະບ້ານ
ທີ່ປຶກສາໂຄງການ
ໄຫວ້ຍາທ່ານ ຍາຄູແລ້ວ
ແນໃສ່ອານຸລັກໄວ້

ອາຈານບຸນຍົກ ແສນສູນທອນ
ທ່ານທັກທາຍຊາວບ້ານ
ເອົາແນວທາງອອກເຜີຍແຜ່
ໃຫ້ຫລານຫລ້າໄດ້ສືບທາວ

* ຍ້ອນວ່າຄາວນີ້ນັ້ນ
ຜູ້ອ່ານທັງຄົນຂຽນ
ປະປ່ອຍນອນໃນຕູ້
ກືວ່າພູມປັນຍາລາວຄ່າລ້ຳ

ປັ້ນເທີນທ່າງຈານລານ
ຮອດຜູ້ຟັງມີນ້ອຍ
ຢູ່ເພດານຄ້າງຂື່
ບໍ່ນຳໃຊ້ເຂົ້າສະໄໝ

* ໃນໃບລານບັນທຶກໄວ້
ນອກນັ້ນຍັງບັນທຶກ
ທັງຕຳນານຕຳລາພ້ອມ
ສາດສະດາຈານ ດຣ. ຣະຣັນ ຍົກຍ້ອງ

ໄຕປິດົກແປດໝື່ນສີ່ພັນຂັນ
ສາດຕະສິນຫລາຍດ້ານ
ມີນຄາກາໄສຍະສາດ
ລານລາວນີ້ແຜ່ນຄຳ

* ຈາກນັ້ນວິຊາການກ່າວຊ້ຳ
ໂຄງການກໍອຸປະກອນ
ຂໍແຜ່ທາງຊາວບ້ານ
ສິບສາມ ສິບສີ່ປີມາຊ່ວຍໄດ້

ຂັ້ນຕອນກ່ອນລົງມື
ເຄື່ອງມືມາພ້ອມ
ຍິງຊາຍນ້ອຍໃຫຍ່
ຕ່າງໃຫ້ຊ່ອຍໄວ

* ແນວໂຮມສິລະວັດໄດ້
ຊັກຊວນກັນລົງວັດ
ແກ້ໜັງສືຢາຍໄວ້
ມັດໃດເຊັດຮຽບຮ້ອຍ

ໂຫລະໂຄ່ງປະຊາສຳພັນ
ອັ່ງສາລາທຳກວ້າງ
ລຽນແຖວເປັນລະບຽບ
ເກັບໂຮມທ້ອນບ່ອນດຽວ

* ວິຊາການຣິບອ້ຽວຄົ້ນ
ຊຸມຂຽນແລ້ວເອົາມາມັດ
ເຂົ້າກົງຂາວແຂວນປີ້
ໃຊ້ເຊືອກຝ້າຍກັກແບບເຄົ້າ

ຈັດເຂົ້າໝວດລົງທະບຽນ
ເຂົ້າຊຸດເດີມຕາມເຄົ້າ
ເລືອກສີ້ນຜ້າຜືນດີພັບໃໝ່
ບູຮານເກົ້າເພື່ອນເຮັດມາ

* ປະຊາຊົນເບິ່ງແລ້ວ
ເຮັດໃຫ້ຈົບງາມອີຫລີ
ເປັນທີ່ພໍອົກພໍໃຈຊາວບ້ານ
ບຸນຄຸນຫລາຍບໍ່ແມ່ນນ້ອຍ

ເລີຍຊົມຊື່ນດີໃຈ
ແຕ່ເກີດມາບໍ່ພານພໍ້
ນຳໂຄງການມີແຜນຊ່ອຍ
ເພິ່ນມາບ້ານຊ່ອຍຊູ

* ຍາທ່ານຍາຄູເຫັນພໍ່າພ້ອມ
ພາຍລຸນງານສຳເລັດ
ເອົາກອງຫາງກອງຕຸ້ມ
ແຕ່ງຂັນເຂົ້າຕອກດອກໄມ້

ສະຫນອງຕອບບຸນຄຸນ
ແຫ່ສະຫລອງພຣະທັມເຈົ້າ
ຟັງຣາດສະໄນຄ້ອງແຊ່ງ
ຍໍພຣະທັມເຈົ້າແຫ່ແຫນ

* ສົມຊື່ແດນຈຳພອນມັ່ງຄັ່ງ
ນັບຖືຮີດຄອງດີງາມ
ແລ້ວສົມມາພຣະທັມເຈົ້າ
ພ້ອມພາຂວັນໄກ່ຕົ້ມ

ຄັ້ງໃຫຍ່ພຣະຄຳພີ
ແຕ່ງຕາມປະເພນີເຄົ້າ
ຫາພາເຂົ້າພາປາມາສູ່
ບາສີໃຫ້ຜູກແຂນ

* ສາມສິບສາມວັດແມ່ນສຳຫລວດແລ້ວ
ບ້ານ, ວັດ ສະແດງຄຳຊົມເຊີຍ
ໂຊກສົມພານຂອງຊາວບ້ານ
ດ້ວຍການນຳຂອງໂຄງການຄັ້ງນີ້

ສາມສິບເອັດພັນຜູກໃບລານ
ພໍ່າສໍລະເສີນຍ້ອງ
ໂຮມແຮງຊູເຊີດຊ່ວຍ
ເຍືອງພຣະທັມເຈົ້າໃຫ້ແຜຜາຍ

* ພໍໂຄງການຈະເຄື່ອນຍ້າຍ
ບອກຫມັ່ນມາຫຽວຢາມ
ກ້າຫາກເດີນພານພໍ້
ບາງເທື່ອໄປແກ່ວກ້ຳ

ສຽງເອີ້ນສັ່ງເນືອງນັບ
ຕາງຜູກແພງເນືອຫນ້າ
ກາງທາງໃຫ້ກາມໄກ່ ແດ່ເດີ
ວຽງຈັນກວ້າງຊິແວ່ຢາມ.



◀ *ທ່ານ ມະຫາ ບຸນຕຸ້ມ ສີບັບພາ ກຳລັງທ່ຄຳພີ ບ.ຫວດ ບ້ານເກີດຂອງທ່ານເອງ ມ. ຈຳພອນ ແຂວງສະຫວັນນະເຂດ*

# ປົກສຳຫລວດແຫ່ງເມືອງຈຳປາ

ໂດຍ : ໄຂ່ມຸກດຳ

ກ້ຳ ທ່ານຫາກໄດ້ໄປເຖິງເມືອງປາກເຊແຂວງຈຳປາສັກ ແລະ ແວະເຂົ້າຊົມຫໍພິພິທະພັນ ແຂວງຈຳປາສັກ ທ່ານອາດຈະພົບ ແລະ ລຸ້ນຫນ້າລຸ້ນຕາ ຄົນຜູ້ນຶ່ງທີ່ຊື່ ທອງພູນ ພົມມາລາ ຄະນະຮັບຜິດຊອບຫໍພິພິທະພັນ ຊຶ່ງຂຶ້ນກັບພະແນກກະແຫລງຂ່າວ ແລະ ວັດທະນະທຳ ທ່ານ ທອງພູນ ເກີດເມື່ອ ວັນທີ່ 4 ເດືອນ ພະຈິກ ປີ 1939 ທີ່ບ້ານຫີນສີ່ວ ເມືອງໂຂງ ແຂວງຈຳປາສັກເອງ.

-ປີ 1947 - 1948 ເປັນສັງກະລີຢູ່ວັດຫີນສີ່ວ ເມືອງໂຂງ ແຂວງ ຈຳປາສັກ ຮຽນຊັ້ນປະຖົມປີ 1

-1948 - 1949 ບັບພະຊາເປັນສຳມະເນນແລ້ວໄດ້ເຂົ້າຮຽນນັກທຳຢູ່ໂຮງຮຽນປາລີວັດຫີນສີ່ວນັ້ນເອງ.

-1949 - 1951 ຮຽນຈົບນັກທັມເອກ ຢູ່ໂຮງຮຽນປາລີວັດກາງໂຂງ ແຂວງຈຳປາສັກ

-1951 - 1954 ຮຽນຕໍ່ນັກທັມ (ມໍ3 ແລະ ມໍ4) ທີ່ໂຮງຮຽນປາລີວັດຫລວງ ເມືອງປາກເຊ ແຂວງຈຳປາສັກ.

-1955 - 1957 ຮຽນຈົບມໍ6 ຢູ່ໂຮງຮຽນປາລີ ວັດສີຖານເໜືອ ແຂວງ ກຳແພງນະຄອນວຽງຈັນ.

-1957 - 1958 ເປັນຄູສອນໂຮງຮຽນປາລີ ຢູ່ວັດບ້ານຫ້ວຍ ເມືອງໂຂງ ແຂວງ ຈຳປາສັກ.

-1959 - 1960 ອຸປະສົມບົດເປັນພະແລ້ວສືບຕໍ່ຮຽນຊັ້ນອຸດົມຢູ່ໂຮງຮຽນຊັ້ນສູງວັດອົງຕື້ ມະຫາວິຫານນະຄອນວຽງຈັນ

-1960 - 1961 ເປັນຄູສອນຢູ່ໂຮງຮຽນ ປາລີວັດບ້ານຫ້ວຍ ເມືອງໂຂງ ແຂວງຈຳປາສັກ ອີກເທື່ອນຶ່ງ.

- 1961 - 1975 ສິກອອກມາເຮັດວຽກຢູ່ວິທະຍຸຂ່າວສານ ຢູ່ເມືອງປາກເຊ

-1975 - 1979 ເປັນນັກຂ່າວປະຈຳຂ່າວສານ ແຂວງຈຳປາສັກ

-1979 - 1983 ເປັນຫົວຫນ້າຂະແໜງໂຄສະນາ ເມືອງປາກເຊ ຢູ່ພະແນກໂຄສະນາແຂວງຈຳປາສັກ.

-1983 - 1995 ເປັນຮອງຫົວຫນ້າຫ້ອງການຮັບຜິດຊອບສະຖິຕິແຜນການພະແນກ ຖ/ວ ແຂວງຈຳປາສັກ.



ທ່ານທອງພູນ ພົມມະລາ

-1995 - 1999 ເປັນຮອງອຳນວຍການ ຫໍພິພິທະພັນມູນເຊື້ອປະຫວັດສາດແຂວງຈຳປາສັກຮັບຜິດຊອບຫ້ອງສະຫມຸດ.

-1999 - 2001 ເປັນຫົວຫນ້າອຳນວຍການວິທະຍຸ ແລະ ໂທລະພາບ ເມືອງໂຂງ ແຂວງຈຳປາສັກ.

ເລີ່ມແຕ່ວັນທີ 14 ເດືອນຕຸລາ ປີ 1998 ທ່ານໄດ້ຮັບການແຕ່ງຕັ້ງຈາກພະແນກກະແຫລງຂ່າວ ແລະ ວັດທະນະທຳ ໃຫ້ລົງສົມທົບເຄື່ອນໄຫວກັບຫນ່ວຍສຳຫລວດ ແລະ ປົກປັກຮັກສາຫນັງສືໃບລານໃນທົ່ວແຂວງຈຳປາສັກ ເລີ່ມຈາກເມືອງໂພນທອງ. ຈາກຈຸດນີ້ ທ່ານກໍ່ພະຍາຍາມປັບຕົວເອງໃຫ້ເຂົ້າກັບສະພາບວຽກງານ. ເຖິງທ່ານຈະບໍ່ມີຄວາມຮູ້ທາງດ້ານການສຳຫລວດ ບໍ່ເຄີຍຜ່ານວຽກງານແບບນີ້ມາກ່ອນ, ແຕ່ທ່ານເອງກໍ່ໄດ້ພະຍາຍາມສຶກສາສອບຖາມ ແລະ ຖອດຖອນເອົາບົດຮຽນຈາກອ້າຍນ້ອງຫນ່ວຍສຳຫລວດຈົນຮູ້ສຶກວ່າທ່ານມີຄວາມຮັບຮູ້, ມີຄວາມຮັບຜິດຊອບຕໍ່ວຽກງານນີ້ເປັນຢ່າງດີ.

ຈາກນັ້ນ ທ່ານເອງກໍ່ໄດ້ຄອຍຊ່ວຍເຫລືອທຸກວຽກງານ ເຊັ່ນ : ວຽກປະຊາສຳພັນກັບທ້ອງຖິ່ນ, ວຽກງານບໍລິການ ແລະ ລວມທັງວຽກວິຊາການ. ທ່ານໄດ້ຮັບຮູ້ ແລະ ເຂົ້າໃຈແຕ່ລະຂັ້ນຕອນຂອງວຽກວິຊາການໄດ້ເປັນຢ່າງດີ. ທ່ານເປັນຄົນຈິງຈັງຕໍ່ວຽກງານ, ເປັນຄົນຫ້າວຫັນ, ຍິ້ມແຍ້ມ

ແຈ່ມໃສ, ມີມະນຸດສຳພັນດີ ແລະ ສິ່ງຄຳຄັບ ທ່ານເປັນຄົນທີ່ມີຄວາມເຊື່ອຫມັ້ນໃນຕົວເອງສູງ.

ຈາກຈຸດນີ້ ທ່ານທອງພູນກໍ່ເປັນນຶ່ງໃນທີມງານສຳຫລວດ ແລະ ປົກປັກຮັກສາຫນັງສືໃບລານ ໃນທົ່ວແຂວງຈຳປາສັກ ທ່ານຮ່ວມເຄື່ອນໄຫວນຳໜ່ວຍ ແຕ່ຕົ້ນຕະລອດປາຍ ເຮັດໃຫ້ວຽກງານນີ້ປະສົບຜົນສຳເລັດ ແລະ ປະກົດຕົວເລກ ໃນການສຳຫລວດຂຶ້ນບັນຊີ ສົກປີ 1998-1999 ເຖິງ 55 ຜົນກວ່າຜູກ ຊຶ່ງຕົວເລກນີ້ກໍ່ບໍ່ເຄີຍມີມາກ່ອນ ແລະ ເປັນຕົວເລກສູງສຸດຂອງວຽກງານການສຳຫລວດ ທີ່ຜ່ານມາ.

ຈາກຜົນສຳເລັດດັ່ງກ່າວ ທ່ານທອງພູນ ໄດ້ກ່າວວ່າ : " ຂ້າພະເຈົ້າມີຄວາມຮູ້ສຶກພາກພູມໃຈທີ່ໄດ້ເຮັດວຽກຮ່ວມກັບອ້າຍນ້ອງນັກວິຊາການ ຄືຫນ່ວຍສຳຫລວດຫນັງສືໃບລານ ຂ້າພະເຈົ້າປະທັບໃຈໃນການເຮັດວຽກຂອງອ້າຍນ້ອງວິຊາການ ເຮັດວຽກບໍ່ຮູ້ເວັນຮູ້ຄືນ, ເຮັດວຽກບໍ່ເລືອກວັນເວລາ ແລະ ບໍ່ຮູ້ອິດຮູ້ເມື່ອຍ ຂ້າພະເຈົ້າສະແດງຄວາມຂອບໃຈຕໍ່ໂຄງການປົກປັກຮັກສາຫນັງສືໃບລານລາວ ການຮ່ວມມື ລາວ-ເຢຍຣະມັນ ທີ່ໄດ້ນຳເອົາແສງສະຫວ່າງມາສູ່ຊາວພຸດຈຳປາ ໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງວຽກງານການປົກປັກຮັກສາຫນັງສືໃບລານ ໃຫ້ມີອາຍຸຍາວນານໄປຄູ່ກັບຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດໃນອະນາຄົດ "

ປັດຈຸບັນ ທ່ານທອງພູນ ພົມມາລາ ໄດ້ຖືກສັບຊ້ອນໄປເປັນຫົວຫນ້າອຳນວຍການ ໂທລະພາບ ເມືອງ ໂຂງ ແຂວງຈຳປາສັກເຊິ່ງເປັນອີກວຽກງານນຶ່ງ ທີ່ທ່ານມີປະສົບການມາແລ້ວຫລາຍປີ. ເຊື່ອໝັ້ນວ່າ ທ່ານຈະກ້າວຕໍ່ໄປດ້ວຍຜົນສຳເລັດອັນຈົບງາມອີກ.

ທາງໂຄງການຂໍອວຍພອນໃຫ້ທ່ານຈົ່ງປະສົບຜົນສຳເລັດໃນວຽກງານທີ່ພັກ-ລັດມອບຫມາຍ, ແລະ ສົມຫວັງທຸກສິ່ງທຸກປະການ ຫວັງວ່າຈະໄດ້ຮ່ວມວຽກງານກັບທ່ານອີກໃນຄັ້ງຕໍ່ໆໄປ

## ອັກສອນທັມຄຳກອນ ເລື່ອງ " ທ້າວຍີ່ "

**ບັ້ນຜູ້ສາວຕ້ອນຮັບທ້າວຍີ່** *(ກ່າຍຈາກຫໍສະໝຸດແຫ່ງຊາດ ແລະ ຕີພິມຕົວທັມ : ໂດຍ ຄຳສິງວົງສະຫວ່າງ)*

| | | | |
|---|---|---|---|
| ᨣᩅ᩠ᨶᩮᩁᩫᩣᩮᨩᩨ᩠ᨶᨷᩣᨴ᩶ᩣ᩠ᩅ | ᨾᩣᩱᨶᩁ᩶ᩣ᩠ᨶᨡ᩵ᩅ᩠ᨦ ᨯᩦᨯᩣ᩠ᨿ | ຄວນເຮົາເຊີນບາທ້າວ | ມາໃນຮ້ານຂ່ວງດີດາຍ |
| ᩈᩣ᩠ᩅᨠᩴ᩵ᨸᩪᩈᩣ᩠ᨯᩱ᩠ᩅ᩶ | ᩉ᩠ᨾᩬ᩠ᨶᩮᨳᩢ᩶ᩣᩁᩦ᩠ᨷᩁ᩠ᨿᨦ | ສາວກໍ່ປູສາດໄວ້ | ຫມອນເທົ້າຮີບຮຽງ |
| ᩁᩣ᩠ᨯᨴᨶᩣ ᩯᨧ᩠᩵ᨾᩮᨧᩢ᩶ᩣ | ᨾᩣᩱᨶᩁ᩶ᩣ᩠ᨶᨡ᩵ᩅ᩠ᨦ | ຣາດທະນາແຈ່ມເຈົ້າ | ມາໃນຮ້ານຂ່ວງ |
| ᩮᨾᩬᩥ᩵ᨦᨷᩢ᩠᩶ᨶᨴ᩶ᩣ᩠ᩅᨿᩦ᩵ᨶᩬ᩶ᨿ | ᨣᩧ᩠ᨦᨣ᩶ᩬ᩠ᨾᨶᩢ᩠᩵ᨦᩱᨶ | ເມື່ອບັ້ນທ້າວຍີ່ນ້ອຍ | ຄືງຄ້ອມນັ່ງໃນ |
| ᨩᨻᩪ᩵ᨻᩬ᩶ᨾ | ᨺᩪ᩠ᨦᨷ᩵ᩣ᩠ᩅᨶᩣ᩠ᨿᩮᨾᩬᩥ᩠ᨦ | ຊະພູ່ພ້ອມ | ຝູງບ່າວນາຍເມືອງ |
| ᨶᩣᩴᨷᩣᨣᩣ᩠ᨶ | ᩀᩪ᩵ᩯᨺ᩠ᨦᨻᩬ᩶ᨿ | ນຳບາຄານ | ຢູ່ແຝງພ້ອຍ |
| ᩈᩣ᩠ᩅᨠᩴᨿᩴᨡᩢ᩠ᨶᩈᩃᩣᨻᩬ᩶ᨾ | ᨻᩪᨣᩣᩴᩉ᩠ᨾᩣ᩠ᨠᩋ᩵ᩬ᩠ᨶ | ສາວກໍຍໍຂັນສລາພ້ອມ | ພູຄຳຫມາກອ່ອນ |
| ᨣ᩠ᩅᩣ᩠ᨿᩯᨠ᩵ᩮᨧᩢ᩶ᩣ | ᨷᩣᨴ᩶ᩣ᩠ᩅᨴᩦ᩵ᩮᨩᩥ᩠ᨦ | ກວາຍແກ່ເຈົ້າ | ບາທ້າວທີ່ເຊີງ |
| ᩁᩣ᩠ᨯᨴᨶᩣᩮᨧᩢ᩶ᩣ | ᨴᩢ᩠ᨦᨸ᩠ᩅᨦᨣ᩶ᩮ᩠ᨿᩬᩉ᩠ᨾᩣ᩠ᨠ | ຣາດທະນາເຈົ້າ | ທັງປວງຄ້ຽວຫມາກ |
| ᨣᩢ᩠ᨶᩅ᩵ᩣᨣ᩶ᩮ᩠ᨿᩬᩉ᩠ᨾᩣ᩠ᨠᩯᩃ᩶ᩅ | ᨧᩣᩴᩱᩉ᩶ᨳᩪ᩠ᨯᩀᩣ | ຄັນວ່າຄ້ຽວຫມາກແລ້ວ | ຈຳໃຫ້ຖູດຢາ |
| ᨷᩢ᩠ᨯᨶᩦ᩶ᨷᩩ᩠ᨶᨾᩦᩮᨧᩢ᩶ᩣ | ᨾᩣᩮᨳᩥ᩠ᨦᨹᩣ᩠ᨿᩰᨻ᩠ᨯ | ບັດນີ້ບຸນມີເຈົ້າ | ມາເຖິງຜາຍໂພດ |
| ᩋᩴᩯᨳ᩠ᨷᨻᩧ᩠᩶ᨶ | ᨲᩦ᩠ᨶᩮᨧᩢ᩶ᩣᩀᩪ᩵ᨴᩦ᩠ᩅ ᩯᨯᨴ᩶ᩬ᩠ᨶ | ອໍແທບພື້ນ | ຕີນເຈົ້າຢູ່ທີວ ແດທ້ອນ |
| ᩈᩦᩈᩉᩖ᩠ᨿᩅᩯᨠ᩶ᩅ | ᨷᩣᨣᩣ᩠ᨶᨴ᩶ᩣ᩠ᩅᨿᩦ᩵ | ສີສະຫລຽວແກ້ວ | ບາຄານທ້າວຍີ່ |
| ᨾ᩵ᩣ᩠ᨿ ᪧ ᩉ᩠ᨶ᩶ᩣ | ᩉ᩠ᩅᩯᨿ᩠᩶ᨾᨲᩬ᩠ᨷᩈᩣ᩠ᩅ . | ມ່າຍໆຫນ້າ | ຫົວແຍ້ມຕອບສາວ. |

# ມໍລະດົກທີ່ໜອງລຳຈັນ

*ໂດຍ: ລຳສິງ ວົງສະຫວ່າງ*

**ເວົ້າ**ເຖິງໜອງລຳຈັນ ຄົນແຂວງສະຫວັນນະເຂດຮູ້ກັນດີ ເພາະເປັນຈຸດນຶ່ງ ກາຍເປັນແຫລ່ງທ່ອງທ່ຽວວັດທະນະທຳຂອງແຂວງ ຍ້ອນວ່າມີຫໍໄຕບ່ອນເອົາໜັງສືໃບລານໄວ້. ເປັນຫໍໄຕທີ່ເກົ່າແກ່ເຮັດດ້ວຍໄມ້ ມີລັກສະນະໂດດເດັ່ນກວ່າໝູ່ ຕັ້ງຢູ່ແຄມວັດຈັນທະສາໂລ ບ້ານໜອງລຳຈັນ ເມືອງຈຳພອນ. ເມື່ອກ່ອນ ຈຸດທີ່ຕັ້ງຂອງຫໍໄຕມີນ້ຳໜອງລຳຈັນ ເຖົ້າແກ່ບາງຄົນເພິ່ນເລົ່າວ່າ ນ້ຳໜອງນີ້ ມັນເປັນນ້ຳຫອມນ້ຳຈັນ, ບ້າງກໍ່ວ່າມີກົກໄມ້ຈັນຢູ່ໃນໜອງແຫ່ງນີ້ ແລະ ອື່ນໆ. ປັດຈຸບັນ ໜອງດັ່ງກ່າວນີ້ບໍ່ມີນ້ຳຂັງແລ້ວ ສ່ວນຫໍໄຕກໍ່ຊຸດໂຊມ ຊາວບ້ານ ແລະ ອຳນາດການປົກຄອງໃນສາມບ້ານ ກຳລັງຮ່ວມກັນສ້າງຫໍໄຕຂຶ້ນມາອີກຫລັງໃໝ່ ເຮັດດ້ວຍດິນຊີມັງເສີມເຫລັກແຕ່ຮູບຊົງຍັງເຮັດຄືຂອງເກົ່າ. ສ່ວນຫໍໄຕເກົ່າຫລັງນີ້ ກໍ່ຈະອະນຸລັກປະຕິສັງຂອນໄວ້ສືບໄປ.



ຫໍໄຕວັດໜອງລຳຈັນທີ່ເຮັດດ້ວຍໄມ້

ວັດແຫ່ງນີ້ສະໄໝບູຮານແມ່ນເປັນຈຸດໃຈກາງການສຶກສາຂອງສົງແຫ່ງນຶ່ງ ມີຄຳກ່າວຂານກັນວ່າ ຮຽນຈົບຢູ່ສຳນັກແຫ່ງນີ້ ສາມາດຮູ້ພາສາສັດໄດ້ ແລະ ຢຽບໃບໄມ້ແຫ້ງບໍ່ດັງ ຈຸດພິເສດອີກອັນນຶ່ງ ອານາເຂດວັດແຫ່ງນີ້ ແຕ່ກ່ອນເພິ່ນໄດ້ປະກາດໃຫ້ເປັນ**ມະຫາສີມາອັນ** ທຸກຄົນເຂົ້າໄປໃນເຂດວັດຕ້ອງໄດ້ປິດເກີບບໍ່ມີການຍົກເວັ້ນ.



ເປີດສຳມະນານ້ອຍທີ່ວັດໜອງລຳຈັນ

ວັດໜອງລຳຈັນ ເປັນວັດແບບຢ່າງອີກບ່ອນນຶ່ງ ຂອງວັດທະນະທຳລາວເຮົາ ຄື ເພິ່ນບໍ່ອະນຸຍາດໃຫ້ ຜູ້ໃດ- ຜູ້ ນຶ່ງເອົາກະດູກເຂົ້າໄວ້ຫລືເຮັດທາດໃສ່ ຍ້ອນວ່າເປັນສະຖານທີ່ສັກກາລະບູຊາ ເປັນບ່ອນສັກສິດ ເປັນບ່ອນນ້ອມຈິດຫາຄວາມສະຫງົບ ແລະ ສະແຫວງບຸນ ດັ່ງນັ້ນ ກະດູກຄົນທຳມະດາສາມັນ ທີ່ຍັງຕັດກິເລດບໍ່ທັນໄດ້ ເພິ່ນຈຶ່ງບໍ່ເຮັດທາດໃສ່ຢູ່ໃນວັດ ເພາະເປັນການກີດຂວາງສະຖານທີ່ ທັງເປັນບາບ ຜູກມັດຈິດວິນຍານຂອງຜູ້ຕາຍ ຄົນທີ່ຕາຍແລ້ວບໍ່ສາມາດຟັງທັມໄດ້ ມີແຕ່ຄົນທີ່ມີຊີວິດຢູ່ ຈຶ່ງສະແຫວງບຸນ ແລະ ຟັງທັມໄດ້. ອີງຕາມຜູ້ອາວຸໂສຄູບາອາຈານເຄີຍເວົ້າສູ່ຟັງວ່າ: ການສ້າງທາດຢູ່ວັດ ໃນພຸດທະສາສນາ ເພິ່ນເຮັດໄດ້ສີ່ກໍລະນີຄື :

- ໃສ່ດູກ ພະສັມມາ ສັມພຸດທະເຈົ້າ
- ໃສ່ດູກ ພະອໍຣະຫັນຕາເຈົ້າ



ຫົວໜ້າໂຄງການແລະການນຳແຂວງ ພົບປະໂອ້ລົມກັບຊາວບ້ານ

- ໃສ່ດູກ ພະປັດເຈກກະເຈົ້າ
- ໃສ່ດູກ ພະເຈົ້າຈັກກະພັດ

ຄົນດັ່ງກ່າວເປັນຜູ້ມີຜົນງານຕໍ່ມວນມະນຸດ ຍາມໃດກໍ່ມີຜູ້ຄົນໃຫ້ຄວາມເຄົາລົບນັບຖື ພ້ອມກັນປົກປັກຮັກສາໄວ້ໃຫ້ຍາວນານໃນສິ່ງຢ່າງນີ້ສ້າງຢູ່ວັດໄດ້ ນອກນັ້ນແມ່ນບໍ່ອະນຸຍາດ.

ວັດໜອງລຳຈັນ ໃຜໆກໍ່ກ່າວກັນວ່າມີໜັງສືໃບລານຫລາຍ ໃນເມື່ອກ່ອນ ເພື່ອເປັນການອະນຸລັກປົກປັກຮັກສາທາງໂຄງການໃບລານກໍ່ໄດ້ເລັ່ງໃສ່ທີ່ວັດນີ້ ຄື: ໃນວັນທີ 8/12/2000 ກໍ່ໄດ້ໄຂພິທີສຳມະນາລະດັບທ້ອງຖິ່ນຂຶ້ນ ທີ່ວັດດັ່ງກ່າວ ໂດຍມີຫົວໜ້າໂຄງການໃບລານ ທ່ານນາງກິງເດືອນ ເນດຕະວົງ, ຫົວໜ້າວັດທະນະທຳແຂວງ ທ່ານຕື້ ສົມພຸດທະລັງສີ ພ້ອມດ້ວຍຄະນະເມືອງຈຳພອນ ພະສົງ ແລະ ເຖົ້າແກ່ອາວຸໂສເຂົ້າຮ່ວມຮັບຟັງການໂອ້ລົມກໍ່ຄືທຳຄວາມເຂົ້າໃຈກັນ ໃນການອະນຸລັກຮັກສາມູນມໍລະດົກວັດທະນະທຳ ມີຜູ້ເຂົ້າຮ່ວມທັງໝົດ 40 ຄົນ ພາຍຫລັງໂອ້ລົມແລ້ວ ກໍ່ໄດ້ດຳເນີນການປົກປັກຮັກສາ ຄືເຮັດອະນາໄມແລ້ວຂຶ້ນບັນຊີເປັນເວລາສິບວັນຈິ່ງສຳເລັດ ມີໜັງສືທັງໝົດ 2,931 ຜູກ, ສະບັບອາຍຸເກົ່າແກ່ທີ່ສຸດ ມີອາຍຸໄດ້ 331 ປີ, ຜ່ານການປົກປັກຮັກສາແລ້ວ ກໍ່ໄດ້ມອບໝາຍໃຫ້ຄະນະບຸກຄົນເປັນຜູ້ຮັບຜິດຊອບເຊັ່ນ :

- ຝ່າຍພະສົງ
  1. ຍາພໍ່ຄູທ່ານ
  2. ຍາພໍ່ຄຳ
  3. ຍາພໍ່ຫວັດ

- ຝ່າຍຄາລະວາດ
  1. ຈານຄຳຜົງ ແນວໂຮມ ບ້ານໃຕ້
  2. ທິດຄຳຜົງ ສາລະວັດ ບ້ານໃຕ້
  3. ຈານເກິ່ງ ສາລະວັດບ້ານກາງ
  4. ຈານກວ້າງ ສາລະວັດ ບ້ານກາງ
  5. ລຸງໄຮ ແນວໂຮມ ບ້ານເໜືອ
  6. ທ່ານກົມ ແນວໂຮມ ບ້ານເໜືອ



ຊາວບ້ານໜອງລຳຈັນຮໍ່ໜັງສືທັມ ດ້ວຍຜ້າໄໝ ຊຶ່ງຊາວບ້ານໄດ້ເຮັດເອງ

ຄະນະດັ່ງກ່າວເພີ່ນຈະຕິດຕາມເບິ່ງແຍງອະນຸຍາດ ຫລືບໍ່ອະນຸຍາດໃຫ້ຄົນຢືມ ຫລືເຂົ້າເບິ່ງເຂົ້າຊົມ ຫາກເມື່ອໃດມີອັນປ່ຽນແປງເພີ່ນກໍ່ຈະແຈ້ງຕໍ່ອຳນາດການປົກຄອ[illegible] ແລະ ວັດທະນະທຳເມືອງຊາບທັນທີ.

ຊາວບ້ານກືວ່າ ໜັງສືດັ່ງກ່າວເປັນມໍລະດົກອັນລ້ຳຄ່າຂອງໜອງລຳຈັນ ເພີ່ນຈະສືບຕໍ່ຈັດຕັ້ງກັນເບິ່ງແຍງໄປເລື້ອຍໆ.

# ການສຳຫລວດຢູ່ກິ່ນຜູ້ໄທ

ໂດຍ: ໄພວົງ ທົງສັກສິດ

**ເມືອງ** ອາດສະພອນ ຕັ້ງຢູ່ທິດຕາເວັນອອກຂອງແຂວງສະຫວັນນະເຂດ ເປັນເມືອງທີ່ຕັ້ງໃຫມ່. ຫາກໍ່ແຍກອອກຈາກເມືອງອາດສະພັງທອງ (ດົງເຫັນ) ໃນປີ 1995. ແຕ່ວ່າພື້ນຖານປະຊາຊົນຜັດຕັ້ງເດີມເກົ່າແກ່. ປະຊາຊົນອາໃສຢູ່ເມືອງອາດສະພອນ ເປັນເຜົ່າຜູໄທ 99% ນັບຖືສາສນາພຸດ ອາຊີບຫລັກແມ່ນເຮັດນາຕາມລະດູ.

ເອກະສານໃບລານໃນແຕ່ລະວັດຍັງດີເປັນສ່ວນຫລາຍ ແຕ່ກໍ່ມີບາງວັດການປົກປັກຮັກສາບໍ່ຄ່ອຍເອົາໃຈໃສ່. ປະໃຫ້ຝົນຮົ່ວໃສ່, ຫນູກັດ ຫລື ປວກກິນ ແລະປະໄວ້ກະແຈກກະຈາຍ ບໍ່ເປັນລະບຽບ.



ໃບລານທີ່ໄດ້ເຮັດອະນາໄມແລະອື່ນບັນຊີແລ້ວ ຢູ່ວັດບ້ານຜັກຂະຍ່າ

ວັນທີ 27/4/2001 ຫນ່ວຍສຳຫລວດຂອງໂຄງການ ໄດ້ເດີນທາງໄປສຳຫລວດ ຢູ່ເມືອງອາດສະພອນ ໂດຍຈັດເອົາບ້ານຜັກຂະຍ່າ ເປັນຈຸດເລີ່ມຕົ້ນເປີດການສຳຫລວດມີ ທ່ານ ດາດສະດາ ຮອງເລຂາພັກເມືອງ ທ່ານຄຳປົງ ຮອງພະແນກ ຖ/ວ ແຂວງ ທ່ານ ຄຳປ້າຍ ຫ້ອງການ ຖ/ວ ເມືອງ ເຈົ້າອະທິການວັດ ນາຍບ້ານ ເຖົ້າແກ່ແນວໂຮມ ສາລະວັດ ແລະ ພໍ່ແມ່ປະຊາຊົນອ້ອມຂ້າງບ້ານດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ. ພາຍຫລັງການສຳຫລວດສຳເລັດແລ້ວ ຫນ່ວຍສຳຫລວດກໍ່ໄດ້ເຄື່ອນໄປແຕ່ລະບ້ານເປົ້າຫມາຍ ທີ່ທາງເມືອງໄດ້ກຳນົດໄວ້ 10 ບ້ານ 10 ວັດ ສຳເລັດລົງໃນວັນທີ 28/5/ 2001. ຫນັງສືໃບລານທີ່ໄດ້ອື້ນບັນຊີແລ້ວມີ : 7.462 ຜູກ, 915 ມັດ, 1.015 ເລື່ອງ.

ຜ່ານການສຳຫລວດຕົວຈິງເຫັນໄດ້ວ່າ ເມືອງອາດສະພອນກໍ່ເປັນເມືອງນຶ່ງທີ່ມີເອກະສານໃບລານຫຼາຍສົມຄວນ ບໍ່ນ້ອຍກວ່າເມືອງອື່ນໆ ທີ່ໄດ້



ຍາພໍ່ບົວຢູ່ວັດບ້ານຜັກຂະຍ່າກຳລັງຈານ(ຂຽນ)ໃບລານ



ທ່ານ ລຳເງິນ ເຈົ້າເມືອງອາດສະພອນ
ເຂົ້າຮ່ວມສະຫລຸບຢູ່ວັດບ້ານໜອງເດີ່ນ

ສຳຫຼວດມາແລ້ວ. ເມືອງດັ່ງກ່າວຍັງເປັນຄັງສະສົມແຫ່ງພູມປັນຍາຂອງນັກປາດອາຈານ ໃນສະໄໝກ່ອນໄດ້ຂຽນໄວ້ໃນຄຳພີໃບລານ ພິເສດໄປກວ່ານັ້ນໜ່ວຍສຳຫລວດຍັງໄດ້ພົບເອກະສານສຳຄັນເກົ່າແກ່ກວ່າໝູ່ ໃນເຂດເມືອງກໍ່ວ່າໄດ້ຄື: ສົມໂພທະທັມ ເພິ່ນຂຽນຂຶ້ນໃນ ຈ.ສ. 1052 ປີ ກົດສະງ້າ ອາຍຸ 311 ປີ ມີ 11 ຜູກ ຄົບ 1 ມັດ ຢູ່ບ້ານຫີນສິ່ວ.

ໜ່ວຍສຳຫລວດຍັງພົບນັກຈານໜັງສືໃບລານອາວຸໂສອົງນຶ່ງ ຢູ່ວັດຝັກຂະຍ່າ ເມືອງອາດສະພອນ. ເພິ່ນກຳລັງຈານ ແລະ ສອນອ່ານໂຕທຳໃຫ້ພະເນນໃສ່ກະດານ ແລະໃບລານທຸກໆມື້. ພະອາຈານພໍ່ບົວ (ຍາພໍ່ບົວ) ຜູ້ຂຽນມີໂອກາດເຂົ້າໄປພົບກັບເພິ່ນໆເວົ້າວ່າ "ຄາວຍັງໜຸ່ມນ້ອຍເຄີຍບວດເປັນເນນເປັນພະ 10 ກວ່າປີ. ໄດ້ຮຽນອ່ານ, ຮຽນຂຽນນຳຄູບາອາຈານ ຈົນສາມາດອ່ານ ແລະ ຂຽນໄດ້. ຍ້ອນໝົດຄວາມພາກພຽນທາງສາສນາຈຶ່ງໄດ້ສິກອອກຈາກສຳມະນະໄປສ້າງຄອບຄົວ. ຈົນອາຍຸໄດ້ 66 ປີ ຈຶ່ງໄດ້ກັບມາບວດຄືນເພື່ອຫາຄວາມສະຫງົບໃນບັ້ນປາຍຊີວິດ. ຍ້ອນຄວາມມັກອ່ານມັກຂຽນໂຕທັມ ໃນອະດີດ ຈຶ່ງໄດ້ຈັບເຫລັກຈານຂຶ້ນຂຽນເພື່ອຈະໄດ້ເຜີຍແຜ່ໃຫ້ຄົນເກີດມາສຸດທ້າຍພາຍຫລັງໄດ້ສຶກສາຮ່ຳຮຽນໂຕໜັງສືທັມສືບໆກັນໄປ.

ການສຳຫລວດຄັ້ງນີ້ປະສົບຜົນສຳເລັດໄປດ້ວຍດີ ກໍ່ຍ້ອນຄວາມຮ່ວມໄມ້ຮ່ວມມືຈາກກ/ວແຂວງການນຳເມືອງອາດສະພອນທຸກຂັ້ນໄດ້ເອົາໃຈໃສ່ໃກ້ຊິດຕິດແທດເປັນຕົ້ນ ນາຍບ້ານແລະປະຊາຊົນພາຍໃນ 10 ບ້ານໄດ້ເອົາໃຈໃສ່ຢ່າງພ້ອມພຽງ ❝

# ເມືອງໃຫມ່ໄຊພູທອງ

*ໂດຍ : ໄຂ່ມຸກດຳ*

ວັນທີ 28 ມິຖຸນາ 2000 ທ່ານ ຄຳເຟືອນ ໄຊຍະເທບ ຄະນະຜະແນກກະແຫລງຂ່າວ ແລະວັດທະນະທຳແຂວງສະຫວັນນະເຂດ ໄດ້ນຳຄະນະໜ່ວຍສຳຫລວດ ພວກເຮົາອອກເດີນທາງຈາກຕົວເມືອງຄັນທະບູລີ ໄປສູ່ເມືອງໄຊພູທອງ ເພື່ອເປີດການສຳຫລວດ ແລະ ປົກປັກຮັກສາໜັງສືໃບລານ. ໃນໂອກາດນີ້ ທ່ານ ບົວພາ ຈັນທະວົງ ຫົວໜ້າຫ້ອງການກະແຫລງ ຂ່າວ-ວັດທະນະທຳເມືອງ, ທ່ານ ບຸນຍົກ ແສນສູນທອນ ທີ່ປຶກສາວິຊາການທັງເປັນຫົວໜ້າໜ່ວຍ ພ້ອມກັບຄະນະວິຊາການສຳຫລວດໜັງສືໃບລານ, ອົງການຈັດຕັ້ງພາຍໃນບ້ານທີ່ກ່ຽວຂ້ອງ ແລະ ພໍ່ແມ່ ເຖົ້າແກ່ ຜູ້ຊົງຄຸນວຸດທິຈຳນວນນຶ່ງກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.



*ຫີບທັມຢູ່ວັດບ້ານບຸ່ງນາດີ*

ວັດສີລິມຸງຄຸນ ບ້ານພູມະເຈດີເຫນືອ ເປັນຈຸດເລີ່ມຕົ້ນຂອງເມືອງໄຊພູທອງ ບ້ານນີ້ເປັນບ້ານທີ່ເກົ່າແກ່ພໍສົມຄວນ ນັບກືສາສນາພຸດ, ອາຊີບຕົ້ນຕໍເຮັດນາ ແລະ ຄ້າຂາຍເປັນສຳຮອງ ບ້ານດັ່ງກ່າວແຕ່ກ່ອນເປັນຈຸດທີ່ຕັ້ງເມືອງເກົ່າມີຊື່ວ່າເມືອງພູມະເຈດີ (ຫລາຍຄົນຍັງເອີ້ນວ່າເມືອງພູມ)

ໃນເວລາ 11:30 ໂມງ ທ່ານ ບົວພາ ຈັນທະວົງ ໄດ້ກ່າວເປີດພິທີ ແລະເວົ້າເຖິງຈຸດປະສົງຄວາມໝາຍຫຍໍ້ໆຂອງວຽກງານການສຳຫລວດ ແລະ ປົກປັກຮັກສາໜັງສືໃບລານ.ຈາກນັ້ນໄດ້ເຊື້ອເຊີນ ທ່ານມະຫາບຸນຍົກ ແສນສູນທອນ ທີ່ປຶກສາທາງດ້ານວິຊາການ ຫົວໜ້າທີມງານໜ່ວຍສຳຫລວດ ຂຶ້ນກ່າວເຖິງຈຸດປະສົງຄວາມເປັນມາຂອງໂຄງການ ແລະ ລົງເລິກເຖິງວຽກງານຜ່ານມາ

ທ່ານໄດ້ສະຫລຸບຫຍໍ້ກ່ຽວກັບວຽກງານການສຳຫລວດຊີ້ໃຫ້ເຫັນຕົວເລກຜົນໄດ້ຮັບຂອງການສຳ ຫລວດໃນຊຸມປີຜ່ານມາ ແລະ ສຸດທ້າຍທ່ານຍັງໄດ້ຍົກໃຫ້ເຫັນຄຸນຄ່າຂອງໜັງສືໃບລານທີ່ໄດ້ບັນທຶກໄວ້ ຊຶ່ງຄຳສັ່ງສອນຂອງອົງສັມມາສັມພຸດທະເຈົ້າ ສະແດງເຖິງຄວາມຮູ້ພູມປັນຍາຂອງຄົນຮຸ່ນກ່ອນ ແລະ ຍົກໃຫ້ເຫັນຄວາມສຳຄັນຂອງໜັງສືໃບລານ ກັບການນຳໃຊ້ໃນໄລຍະປັດຈຸບັນ.

ອ່ານຕໍ່ໜ້າ 15

# ມອບປຶ້ມຂອບໃຈທີ່ຫລຽວເບິ່ງ

ໂດຍ : ຄຳສີງ ວົງສະຫວ່າງ

**ປຶ້ມ** "ຂອບໃຈທີ່ຫລຽວເບິ່ງ" ເປັນຜົນງານ ຂອງທ່ານ ຣັນສ໌ ຊອກ ເບີເກີ ສິລະປິນຖ່າຍພາບຊາວເຢຍຣະມັນ ແລະ ທ່ານ ສົມສະຫນຸກ ມີໄຊ (ຜູ້ໃຫ້ເນື້ອໃນອະທິບາຍ). ປຶ້ມນີ້ມີເນື້ອໃນກ່ຽວກັບຊີວິດວັດທະນະທຳ ຢູ່ຫລວງພະບາງ ເມືອງມໍລະດົກໂລກ ຊຶ່ງໄດ້ຮັບທຶນຊ່ວຍເຫລືອຈາກລັດຖະບານ ສ.ສ.ເຢຍຣະມັນ ເພື່ອພິມແຈກຢາຍໃຫ້ໂຮງຮຽນຕ່າງໆ ໃນທົ່ວປະເທດ.

ທ່ານທູດ ສ.ສ.ຢມອບປຶ້ມໃຫ້ຮ/ຮ ມັດທະຍົມ ແຂວງສະຫວັນນະເຂດ



ໜ່ວຍງານສຳຫລວດຫນັງສືໃບລານທີ່ກຳລັງເຄື່ອນໄຫວຢູ່ແຂວງສະຫວັນນະເຂດ ໄດ້ຮັບມອບຫມາຍໃຫ້ແຈກຢາຍປຶ້ມດັ່ງກ່າວນີ້. ນັບແຕ່ວັນທີ 5 ພະຈິກ 2000 ເຖິງວັນທີ 18 ມັງກອນ 2001 ໄດ້ມອບໄປແລ້ວ 8 ໂຮງຮຽນຂັ້ນມັດທະຍົມ. ນອກນັ້ນກໍ່ໄດ້ມອບໃຫ້ບ້ານ ແລະ ວັດ ພ້ອມທັງໂຮງຮຽນປະຖົມອີກ ໃນ 13 ບ້ານ. ລວມປຶ້ມທີ່ໄດ້ມອບທັງຫມົດໃນຄັ້ງນີ້ 502 ຫົວ. ການມອບປຶ້ມດັ່ງກ່າວນີ້ຍັງຈະໄດ້ສືບຕໍ່ໄປເລື້ອຍໆ ບ່ອນໃດທີ່ຫນ່ວຍສຳຫລວດໄປຮອດ ນ້ອງໆນັກຮຽນກໍ່ຈະໄດ້ອ່ານປຶ້ມດັ່ງກ່າວ ທາງໂຄງການໃບລາຍັງມີປຶ້ມ ແລະ ຂ່າວອີກຈຳນວນນຶ່ງ ໄດ້ມອບໃຫ້ແຕ່ລະບ້ານ ແລະ ໂຮງຮຽນທີ່ຫນ່ວຍສຳຫລວດໄປຮອດ.

ຄູ ແລະ ນັກຮຽນມັດທະຍົມຕົ້ນບ້ານຊອກ ໄດ້ຮັບປຶ້ມຂອບໃຈທີ່ຫລຽວເບິ່ງ



ຄູອັນທະລີ ແລະ ນັກຮຽນໄດ້ຮັບປຶ້ມຂອບໃຈທີ່ຫລຽວເບິ່ງ



ຢູ່ທຸກແຫ່ງ ຄູອາຈານກໍ່ຄືນ້ອງນ້ອຍນັກຮຽນ ເມື່ອໄດ້ຮັບປຶ້ມອ່ານນີ້ແລ້ວ ຕ່າງກໍ່ມີຄວາມດີໃຈ ດັ່ງທີ່ ອ້າຍຄູອັນທະລີ ຄູສອນວິຊາວັນນະຄະດີ ໂຮງຮຽນມັດທະຍົມຕົ້ນໂພນມ່ວງ ເຂດໄຊສຳພັນໄດ້ເວົ້າວ່າ :

**" ໂຮງຮຽນພວກເຮົາຢູ່ບ້ານນອກບໍ່ຄ່ອຍມີໂຄງການໃດມາຢ້ຽມຢາມ, ອາດອຸປະກອນ ໂດຍສະເພາະປຶ້ມອ່ານບໍ່ມີເລີຍ !**

**ເທື່ອນີ້ນັບວ່າເປັນບຸນກຸສົນອັນຍິ່ງໃຫຍ່ ທີ່ທາງໂຮງຮຽນພວກເຮົາໄດ້ຮັບການຊ່ວຍເຫລືອ ພວກເຮົາຈະນຳໃຊ້ປຶ້ມນີ້ໃຫ້ເກີດຜົນປະໂຫຍດອັນສູງສຸດ. ພວກນ້ອງນັກຮຽນ ຈະໄດ້ມີທັດສະນະຄວາມຮູ້ອັນກວ້າງອອກໄປອີກ, ໂດຍສະເພາະ ວັດທະນະທຳຂອງລາວເຮົາ. ໂອກາດນີ້ຕາງໜ້າໃຫ້ໂຮງຮຽນ ຂໍຂອບໃຈມາຍັງທ່ານ ທີ່ອຶດສາພະຍາຍາມນຳເອົາການຊ່ວຍເຫລືອນີ້ມາຮອດມາເຖິງພວກເຮົາ ຫວັງວ່າ ເທື່ອໜ້າພວກທ່ານຄົງຈະມີປຶ້ມມາເພີ່ມມາຝາກໃຫ້ພວກເຮົາອີກຕື່ມ".**

ພວກນ້ອງນັກຮຽນ ໃຜໆກໍ່ຢາກເຂົ້າຮ່ວມເຮັດອະນາໄມໃບລານ ຍ້ອນເຫັນຄຸນຄ່າຂອງປຶ້ມ. ບາງອັນກໍ່ໄດ້ຂັດຈ້ອນອອກຈາກຄຳພີໃບລານກໍ່ມີ.

ວັດທະນະທຳນັ້ນ ຖ້າໄດ້ຮັບການປູກຝັງໄວ້ແຕ່ເຍົາໄວ ເມື່ອໃຫຍ່ຂຶ້ນນ້ຳໃຈຮັກເຊື້ອແພງຊາດກໍ່ຍິ່ງເພີ່ມທະວີເປັນສອງເທົ່າ ❧



*ທ່ານ ຮັນສ໌ ຊອກ ເບີເກີ ອະທິບາຍການນຳໃຊ້ປຶ້ມຢູ່ .ຣ/ຮ . ມ/ຍ. ເມືອງສັນທະບູລີ*

---

*( ເມືອງໃໝ່...) ຕໍ່ຈາກໜ້າ 13*

ທ່ານ ຄຳເພືອນ ໄຊຍະເທບ ຄະນະຜະແນກກໍ່ໄດ້ມີຄຳເຫັນເນັ້ນຢ້ຳກ່ຽວກັບບັນຫາໜັງສືໃບລານ ໃນທ້ອງຖິ່ນທີ່ຕິດກັບຊາຍແດນ ກັບບັນຫາການລັກລອບເຄື່ອນຍ້າຍໄປໄວ້ທີ່ອື່ນ ແລະ ມີການຊື້ຂາຍໄປຕ່າງປະເທດ. ເພື່ອຫລຸດຜ່ອນບັນຫາດັ່ງກ່າວ ທ່ານໄດ້ສະເໜີໃຫ້ທຳການສຳຫລວດໂດຍລະອຽດ ແລະ ໄວເທົ່າໃດຍິ່ງດີ.

ທ່ານໄດ້ກ່າວສະແດງຄວາມຊົມເຊີຍມາຍັງໂຄງການກໍ່ຄືນັກວິຊາການໜ່ວຍສຳຫລວດ ທີ່ມີຄວາມເສຍສະຫລະລົງມາປົກປັກຮັກສາມູນມໍລະດົກໄວ້ ເພື່ອຄົນຮຸ່ນໃໝ່ໄດ້ ສຶກສາຄົ້ນຄ້ວາ ແລະ ຮ່ຳຮຽນຕໍ່ໄປ ບໍ່ວ່າຊາວສະຫວັນນະເຂດກໍ່ຄືປະຊາຊົນທົ່ວປະເທດ.

ໃນໂອກາດນີ້ໜ່ວຍສຳຫລວດຍັງໄດ້ສົມທົບກັບຜະແນກ ແລະ ຫ້ອງການກະແຫລງຂ່າວ-ວັດທະນະທຳເມືອງ. ພ້ອມດ້ວຍບັນດາແຂກທີ່ເຂົ້າຮ່ວມເພື່ອຄົ້ນຄ້ວາກຳໜົດບັນດາຈຸດທີ່ຈະລົງສືບຕໍ່ເຄື່ອນໄຫວ ການສຳຫລວດໃຫ້ເປັນເອກະພາບກັນ.

ໃນເມືອງໄຊພູທອງໄດ້ກຳໜົດລະອຽດມີ : 12 ບ້ານ ຈັດເປັນ 3 ຈຸດ ເຂົ້າຮວມກັນ ມີໜັງສືຜູກໃບລານຫລາຍສົມຄວນ. ທ່ານ ບົວພາ ຫ້ອງການກະແຫລງຂ່າວ-ວັດທະນະທຳເມືອງໄດ້ນຳພາການສຳຫລວດແຕ່ລະບ້ານທີ່ໄດ້ກຳໜົດໄວ້ຈົນຮອດວັນທີ່ 12 ກໍລະກົດ 2000 ຈຶ່ງໄດ້ສຳເລັດ. ມີຈຳນວນໜັງສືຜູກໃບລານທີ່ຂຶ້ນບັນຊີລະອຽດ 3.660 ຜູກ, ມີ 286 ມັດ ສະເລ່ຍແລ້ວ ມີ 127 ເລື່ອງ ແລະ ໜັງສື ຊຳລຸດບໍ່ສາມາດຂຶ້ນບັນຊີໄດ້ປະມານ 350 ຜູກ, 21 ມັດ, ພົບໜັງສືເກົ່າແກ່ເຊັ່ນ: ສຸພົມມະໂມກຂະ ແລະ ນິລິນທະປັນຫາ ຈ.ສ. 1174 ມີອາຍຸ 188 ປີ, ທີ່ວັດ ເຂົາທອງ ບ້ານຕາກແດດ.

ສະພາບໜັງສືໃບລານໃນເມືອງໄຊພູທອງນີ້ ສ່ວນຫຼາຍເຫັນວ່າ ຍັງຮັກສາໄວ້ໄດ້ດີເປັນຕົ້ນວ່າ: ຍັງມີໄມ້ປະກັບ, ຫໍ່ດ້ວຍຜ້າຄຳພີ, ມີລັກສະນະຄົບຊຸດ ແລະ ມີຕູ້ໃສ່ຄຳພີເກືອບທຸກໆວັດ.

ໃນ 14 ວັນງານທີ່ທຳການສຳຫລວດ ສະເລ່ຍແລ້ວ 260 ຜູກຕໍ່ວັນ. ເປັນສິ່ງທີ່ໜ້າພູມໃຈ ທີ່ຊາວເມືອງໄຊພູທອງກໍ່ຄືໜ່ວຍສຳຫລວດ ໄດ້ພາກັນເກັບກູ້, ມ້ຽນມັດ ແລະ ປົກປັກຮັກສາເອົາໄວ້ໄດ້ ເຖິງຈະເປັນເວລາທີ່ຊຸ້ນຊ້ຽວກັບລະດູຝົນມີວຽກເຮັດໄຮ່ ເຮັດນາ ແຕ່ປະຊາຊົນຍັງໄດ້ອຶດທົນເອົາເວລາກາງຄືນມາຊ່ວຍເຮັດອະນາໄມໜັງສື ແລະ ບາງຄອບຄົວຍັງໄດ້ຕື່ນຕົວເອົາໜັງສືໃບລານຂອງຕົນເອງມາອະນາໄມ ແລະ ຂຶ້ນບັນຊີນຳອີກ. ຊາວເມືອງໄຊພູທອງສ່ວນຫຼວງຫລາຍຍັງມີຄວາມເຊື່ອກົ່ພະທັມຄຳສັ່ງສອນ ຂອງອົງສົມມາສົມພຸດທະເຈົ້າຢ່າງເຄັ່ງຄັດ ແລະ ປະຕິບັດສືບທອດຈົນເຖິງທຸກວັນນີ້ ❦ ❦ ❦

# ເມືອງຈຳພອນ *ລຳຄອນສະຫວັນ*

ໂດຍ : ຄຳສິງ

***ເມືອງ***ຈຳພອນ ແມ່ນເອີ້ນຕາມຊື່ສາຍນ້ຳເຊຈຳພອນ ທີ່ໄຫລຄົດລ້ຽວກ້ຽວໄປຕາມທົ່ງໄຮ່-ທົ່ງນາ ບັນດາບ້ານຕ່າງໆທີ່ຢັ້ງຢາຍຕາມແຄມນ້ຳເຊ ມີຄວາມສະດວກໃນການທຳມາຫາກິນ.

ແຕ່ດຽວນີ້ ສາຍນ້ຳເຊດັ່ງກ່າວຍາມແລ້ງມັກແຫ້ງຂາດວັງ ສ່ວນຍາມຝົນຜັດມີນ້ຳໄຫລແຮງຕາຝັ່ງເຊເຊາະເຈື່ອນ ສາຍນ້ຳມັກລັດໄປ-ລັດມາ ປະກອບກັບດິນດອນແຖວນີ້ ມີແຕ່ດິນຊາຍແລບເປັນສ່ວນຫລາຍ ເມື່ອນ້ຳເຊາະດິນຈຶ່ງເຈື່ອນງ່າຍ ເຮັດໃຫ້ວັດບ້ານ ແລະ ທົ່ງນາບາງບ່ອນມີຄວາມເສຍຫາຍ. ແຕ່ປັດຈຸບັນ ພັກ- ລັດຖະບານຮ່ວມກັບປະຊາຊົນກໍ່ເອົາໃຈໃສ່ເຮັດຊົນລະປະທານ ມີບາງບ່ອນກໍ່ໄດ້ຂຸດເຈາະເພື່ອໃຫ້ນ້ຳເຊໄຫລລັດໄປທາງອື່ນ ປ້ອງກັນຄວາມເສຍຫາຍທີ່ເກີດຈາກທຳມະຊາດຂອງນ້ຳ. ລຸງສອນສາລະວັດບ້ານຫນອງຫຍ້າມ້າເວົ້າສູ່ຟັງວ່າ : "**ທົ່ງນາແຖວນີ້ແຕ່ກ່ອນບໍ່ຄ່ອຍມີດິນຊາຍມາຖົມ, ແຕ່ດຽວນີ້ ນ້ຳມັກຖ້ວມ ມັນຫອບເອົາດິນຊາຍມາແຕ່ໃສບໍ່ຮູ້ ! ຕາລ່າງ ທໍແຈກຫລັງນີ້ແຕ່ກ່ອນລອດໄດ້, ດຽວນີ້ມີແຕ່ດິນຊາຍ ມາຄູນຂຶ້ນບາງທີອາດຈະເປັນເພາະ ຕົ້ນໄມ້ແຖວນີ້ຫມົດໄປຫລາຍບໍ່ຈັກ**"

ເມືອງຈຳພອນນີ້ມີຜູ້ເຖົ້າເວົ້າສູ່ຟັງວ່າ ເປັນດິນແດນນັກປຣາດຣາຊບັນດິດ ຄົນມີຄວາມຮູ້ສູງ ຍ້ອນມີການສຶກສາພະທັມຄຳພີ. ສ່ວນຫລາຍແຕ່ກ່ອນການສຶກສາແມ່ນມີຢູ່ແຕ່ໃນວັດແມ່ນແຕ່ການສ້າງຢ້າວ ເຮືອນ, ເຮັດໄຮ່, ເຮັດນາ, ການປົກຄອງ, ຂຽນກາບກອນໂຄງສານ ລ້ວນແລ້ວແຕ່ສືບທອດ ແລະ ຮຽນຮູ້ຢູ່ວັດ. ສະນັ້ນ ວັດຈຶ່ງ**ເປັນສູນກາງຄວາມຮູ້ວັດທະນະທຳ ສະແດງອອກທຸກສິນລະປະ**, ສິ່ງດັ່ງກ່າວທີ່ອ້າງມານັ້ນ ປະກົດໃຫ້ເຮົາໄດ້ເຫັນປັດຈຸບັນນີ້ ຄືຫນັງສືຜູກໃບລານ. ຜ່ານການປົກປັກຮັກສາຂຶ້ນບັນຊີໃນຈຳນວນ 33 ວັດໃນເມືອງຈຳພອນມີຫນັງສືໃບລານ 31,262 ຜູກ, ມີຫລາຍກວ່າຫມູ່ແມ່ນວັດຫນອງລຳຈັນ 2,931 ຜູກ, ອາຍຸເກົ່າແກ່ ຈ.ສ. 1031 (331 ປີ).

ລຸງມະຫາບຸນຕູ້ມ ຈາກຫ້ອງການວັດທະນະທຳແຂວງຜູ້ກົ້ງເກືອກລີເລືອນຳຫນ່ວຍສຳຫລວດພວກເຮົາ ເພິ່ນເວົ້າສູ່ຟັງວ່າ ເມືອງຈຳພອນກໍ່ແມ່ນຖິ່ນຖານບ້ານເກີດຂອງເພິ່ນ ເວົ້າເຖິງສິນລະປະຂັບລຳຄອນສະຫວັນດັ້ງເດີມແມ່ນເກີດຢູ່ບ້ານຊະຄືນ, ຜະຫຍາພາສິດທຳອິດກໍ່ໄດ້ຈາກໃບລານ ຜ່ານຫລາຍເສັ້ນຄົນໄດ້ສະສົມມາດົນກໍ່ເລີຍກາຍ

*ແຫ່ທັມຢູ່ບ້ານຊະຄືນເໜືອ ເມືອງຈຳພອນ*



*ຕະຝັ່ງວັດທ່າມ່ວງທີ່ຖືກນ້ຳເຊພັດເຈື່ອນ*



*ຊາວບ້ານລຳບອງ ຄົບງັນໃນມື້ສະຫລຸບວຽກໃບລານ ດ້ວຍລຳຄອນສະຫວັນ*



# ການສຳມະນາທີ່ວັດບ້ານເມືອງກາງ ເມືອງຈຳປາສັກ

*ໂດຍ : ຄຳສິງ*

ອີງຕາມແຜນດຳເນີນການສຳຫລວດໜັງສືຜູກໃບລານ ແຂວງຈຳປາສັກ ສົກປີ 1998-1999, ໃນວັນທີ 28 ພຶດສະພາ 1999. ທ່ານ ນາງກິງເດືອນ ເນດຕະວົງ ອຳນວຍການຫໍສະໝຸດແຫ່ງຊາດ ທັງເປັນຫົວໜ້າໂຄງການປົກປັກຮັກສາໜັງສືຜູກໃບລານ ທ່ານ ນາງດາລາ ກັນລະຍາ ທີ່ປຶກສາປະຈຳໂຄງການ ທັງເປັນກຳມະການປະຈຳສູນກາງແນວລາວສ້າງຊາດ ພ້ອມດ້ວຍຄະນະໜ່ວຍສຳຫລວດໄດ້ພະສົງສາມະເນນ ພາຍໃນວັດເມືອງກາງ ເຂົ້າຮ່ວມຢ່າງພ້ອມພຽງ.

ການສຳມະນາ ໃນເທື່ອນີ້ ຈັດຂຶ້ນເພື່ອສ້າງຄວາມເຂົ້າໃຈ ແລະ ຮູ້ວິທີວິທະຍາໃນການສຳຫລວດ ແລະ ປົກປັກຮັກສາໜັງສືຜູກໃບລານ ອັນເປັນມໍລະດົກຂອງຊາດ ກໍ່ຄືຂອງຊາວບ້ານທ້ອງຖິ່ນ ເພື່ອໃຫ້ມີຄວາມຮັບປະກັນຍືນຍົງຄົງຢູ່ຄູ່ກັບຄົນລາວເຮົາຕລອດໄປ. ພາຍຫລັງສຳມະນາແລ້ວ



ຫໍໄຕວັດພຸດທະວະນາຣາມບ້ານເມືອງກາງເມືອງຈຳປາສັກ



ທ່ານ ນ.ກິງເດືອນ ເນດຕະວົງ ກ່າວໃນກອງປະຊຸມທີ່ວັດເມືອງກາງ

ຈັດສຳມະນາຂຶ້ນ ທີ່ວັດພຸດທະວະນາຣາມ ບ້ານເມືອງກາງເມືອງ ແລະ ແຂວງຈຳປາສັກ. ໃຫ້ກຽດເຂົ້າຮ່ວມ ມີພະອາຈານສຸວັນ ຈັນທະມາດ ປະທານອົງການພຸດທະສາສນາສຳພັນແຂວງ ທ່ານ ສີປະເສີດ ແສນສະຫວັດ ຫົວໜ້າພະແນກກະແຫລງ ຂ່າວ-ວັດທະນະທຳແຂວງ ພ້ອມດ້ວຍ ທ່ານຮອງເຈົ້າເມືອງ, ແນວໂຮມເມືອງ, ເຖົ້າແກ່ແນວໂຮມບ້ານ ແລະ ໜ່ວຍສຳຫລວດກໍ່ໄດ້ຮ່ວມກັບພະສົງ ແລະ ຊາວບ້ານທຳການປົກປັກຮັກສາ ແລະ ຂຶ້ນບັນຊີເປັນເວລາ 20 ວັນ ຈຶ່ງສຳເລັດ. ມີໜັງສືທັງໝົດ 5.061 ຜູກ, 302 ເລື່ອງ ແລະ ອາຍຸເກົ່າແກ່ຄື : ປາຣາຊິກັນ (ປາລີ) ຈ.ສ. 923 ປະມານ 438 ປີ. ພາຍຫລັງສຳຫລວດແລ້ວ ກໍ່ໄດ້ແນະນຳມອບໝາຍໃຫ້ການຈັດຕັ້ງ ແລະ ຊາວບ້ານປົກປັກຮັກສາຕໍ່ໄປ. 66

---

ເປັນອັນ-ເປັນລຳ, ມາຮອດດຽວນີ້ ມັນກໍ່ຜັນຂະຫຍາຍເປັນຮອດສີ່ແບບ ອັນສຸດທ້າຍກໍ່ແມ່ນລຳຄອນສະຫວັນສາກັນ ຊຶ່ງວ່າຢູ່ເຂດແຂວງໃດກໍ່ສາມາດລຳໄດ້ ແຕ່ຈະໃຫ້ຄືອັນດັ້ງເດີມກໍ່ເຮັດຍາກ. **ລຳຄອນສະຫວັນ** ເປັນສິນລະປະນວນຊົນ ຜູ້ລຳ, ຜູ້ເປົ່າແຄນ, ຜູ້ຕີກອງ, ຜູ້ຕີບແຊ່ງ, ຜູ້ຟັງລ້ວນແຕ່ມີສ່ວນຮ່ວມຄືໄດ້ຟ້ອນ ແລະ ຍ້ອນນຳ ຫລື ຢ່າງໜ້ອຍກໍ່ໄດ້ຕົບມື " **ອ່ວນຊວນສວນກ້ວຍທະນີຫວານ ແມ່ນນ້ອງກິນທານຫຍັງຈັ່ງຜູ້ງາມປານແຕ້ມ** " ເມື່ອໝໍລຳຢຸດລຳຊິ້ວຄາວກໍ່ຟັງໝໍສອຍພໍໄດ້ໂຮ່ " **ສອຍໆ ຝີ່ນ້ອງຟັງສອຍ ຝັກກະເດົາ ກິນກັບລາບນົກຈອກ ນີ້ຊູ່ບໍ່ບອກ ຜິດຂອງຮັກສາ ອັນນີ້ກໍ່ແມ່ນສອຍຈັກໜ້ອຍສິສອຍອີກ** ".

66

# ນັກຂ່າວແຫ່ງໄຊພູທອງ

ໂດຍ : ໄຂ່ມຸກດຳ

**ເຖິງ**ຈະເປັນເວລາອັນສັ້ນ ທີມງານຫນ່ວຍສຳຫລວດ ພວກເຮົາກໍ່ຮູ້ສຶກເປັນກຽດ ແລະ ດີໃຈເປັນພິເສດ ທີ່ທາງຫ້ອງການກະແຫລງຂ່າວແລະວັດທະນະທຳ ລະດັບທ້ອງ ຖິ່ນໄດ້ໃຫ້ຄວາມສົນໃຈໃນການສະເຫນີຂ່າວກ່ຽວກັບວຽກ ງານໂຄງການປົກປັກຮັກສາຫນັງສືໃບລານລາວ.

ນ້ອງລຳພູ ໄຊປັນຍາ ນັກຂ່າວສາວຜູ້ຫນຸ່ມນ້ອຍ ແລະ ພຽບພ້ອມທັງຄວາມຮູ້ຄວາມສາມາດ ເປັນຜູ້ໄດ້ຮັບການ ແຕ່ງຕັ້ງຈາກຫ້ອງການກະແຫລງຂ່າວ ແລະ ວັດທະນະທຳ



ນ.ລຳພູ ນັກຂ່າວປະຈຳສ/ນຖ/ວເມືອງໄຊພູທອງ

ເມືອງໄຊພູທອງ ເພື່ອລົງເຄື່ອນໄຫວວຽກງານຮ່ວມກັບ ຫນ່ວຍສຳຫລວດ ນ້ອງໄດ້ຕິດຕາມວຽກງານແຕ່ລະຂັ້ນ ຕອນ, ເກັບກຳຜົນງານການສຳຫລວດຫລື ວຽກອື່ນໆທີ່ພົວ ພັນເຖິງວຽກງານການສຳຫລວດ. ສິ່ງໃດບໍ່ຮູ້ນ້ອງກໍ່ພະຍາ ຍາມສອບຖາມ ແລະ ສົ່ງຂ່າວໄປອອກທາງວິທະຍຸກະຈາຍ ສຽງ ຢູ່ແຂວງເປັນປະຈຳ. ນ້ອງບາງໄດ້ຜ່ານຜ່າທຸກຂໍ້ຫຍຸ້ງ ຍາກ ບໍ່ວ່າເວັນຫລືຄືນຈະພະຍາຍາມຢູ່ໃກ້ຊິດຕິດແທດກັບ ຄະນະທີມງານສຳຫລວດສະເຫມີ ນອກຈາກວຽກນັກຂ່າວ ແລ້ວບາງຄັ້ງກໍ່ຊ່ວຍວຽກຫນ່ວຍສຳຫລວດເຊັ່ນ: ອະທິບາຍ ກ່ຽວກັບວິທີອະນາໄມຫນັງສືໃຫ້ແກ່ປະຊາຊົນຊ່ອຍເກັບມ້ຽນ ແລະຊັບຊ້ອນຫນັງສືທີ່ອະນາ ໄມແລ້ວ, ນອກນັ້ນຍັງໄດ້ດູແລ ເບິ່ງແຍງຊີວິດການເປັນຢູ່ເຊັ່ນ : ແຕ່ງຢູ່ຄົວກິນ, ນ້ຳດື່ມ ແລະ ອື່ນໆເຮັດໃຫ້ວຽກງານສຳຫລວດມີບັນຍາກາດອັນ ໃຫມ່ຢ່າງບໍ່ເຄີຍມີມາກ່ອນ.

ຈົນເຖິງວັນທີ 4 ກໍລະກົດ 2000 ນ້ອງກໍ່ໄດ້ກັບຄືນມາ ເຮັດວຽກຢູ່ຫ້ອງການກະແຫລງຂ່າວ ແລະ ວັດທະນະທຳ ແຕ່ນ້ອງຍັງພະຍາຍາມຕິດຕາມເອົາຂ່າວຂອງການສຳຫຼວດ ພາຍໃນເມືອງ ເພື່ອສົ່ງໃຫ້ທາງວິທະຍຸອອກຂ່າວ ຈົນເຖິງ ວາລະສຸດທ້າຍຂອງວຽກງານສຳຫລວດທີ່ເມືອງໄຊພູທອງ.

ນ້ອງລຳພູ ໃຫ້ຄວາມເຫັນວ່າ " **ຮູ້ສຶກດີໃຈແລະມີກຽດ ທີ່ໄດ້ມີສ່ວນຮ່ວມປະຕິບັດວຽກງານອັນມີຄຸນຄ່າຕໍ່ຊີວິດສັງ ຄົມ ຊຶ່ງບໍ່ເຄີຍຮູ້ ແລະ ບໍ່ເຄີຍເຫັນມາກ່ອນ** ".

ໃນໂອກາດນີ້ ພວກເຮົາທີມງານຫນ່ວຍສຳຫລວດ ຂໍສະ ແດງຄວາມຂອບໃຈຢ່າງລົ້ນເຫລືອ ນຳ ນ້ອງລຳພູ ນັກຂ່າວຜູ້ ໃຈດີແຫ່ງໄຊພູທອງ. ພວກເຮົາຂໍເປັນກຳລັງໃຈໃຫ້ນ້ອງ ແລະ ຂໍໃຫ້ນ້ອງຍຶດຫມັ້ນໃນອຸດົມຄະຕິ ທີ່ວ່າຊອກຮູ້ ແລະ ຮຽນນຳ ເພື່ອປະກອບອາຊີບວຽກງານໃຫ້ກ້າວຫນ້າ ແລະ ຂໍໃຫ້ປະສົບຜົນສຳເລັດຕາມຄວາມມຸ່ງຫມັ້ນປາດຖະໜາເຖີ້ນ..

❤❤❤

## ສົມທຽບປີລາວ- ປີຂອມ

| ລາວ | - | ຂອມ | ລາວ | - | ຂອມ |
|---|---|---|---|---|---|
| ໃຈ້ | - | ຊວດ | ສະງ້າ | - | ມະເມັຍ |
| ເປົ້າ | - | ສະລູ | ມົດ | - | ມະແມ |
| ຍີ່ | - | ຂານ | ສັນ | - | ວອກ |
| ເໝົ້າ | - | ເຖາະ | ເຮົ້າ | - | ຣະກາ |
| ສີ | - | ມະໂຮງ | ເສັດ | - | ຈໍ |
| ໃສ້ | - | ມະເສັງ | ໄຄ້ | - | ກຸນ |

# ສືບຕໍ່ອາຍຸຕົ້ນລານ

*ໂດຍ : ໄຂ່ມຸກດຳ*

ເພື່ອເປັນການປົກປັກຮັກສາໄວ້ເຊິ່ງວັດທະນະທຳອັນດີງາມ ແລະ ຫົວຄິດປະດິດສ້າງຂອງຄົນຮຸ່ນກ່ອນໆທີ່ໄດ້ນຳເອົາໃບໄມ້ມາໃຊ້ໃນການຈານເປັນອັກສອນ ບັນທຶກພະທັມຄຳສອນຂອງພະພຸທທະເຈົ້າ, ບັນທຶກໄວ້ເຊິ່ງຄວາມຮູ້, ພູມປັນຍາອັນສະຫຼາດສ່ອງໃສ ຂອງຄົນໃນສະໄໝບູຮານມີອາຍຸຍາວນານ ແລະໄດ້ນຳໃຊ້ມາຈົນເຖິງປັດຈຸບັນ ທີ່ພວກເຮົາເອີ້ນກັນວ່າ : " **ໃບລານ ຫລື ຄຳພີໃບລານ** ".

ວັນທີ 5 ມີຖຸນາ 2000 ໂຄງການປົກປັກຮັກສາຫນັງສືໃບລານລາວ ໂດຍສົມທົບກັບທ່ານ ພະອາຈານ ຊາລີ ກັນຕະສີໂລ ຫົວໜ້າເຜີຍແຜ່ວິປັດສະນາກຳມະຖານສູນກາງ, ພະອາຈານ ບຸນສີ ວົງພູມີ ຫົວຫນ້າຫ້ອງການ ອ.ພ.ສ. ສູນກາງພ້ອມດ້ວຍພະສົງສາມະເນນ ແລະ ເຖົ້າແກ່ອາວຸໂສຈຳນວນນຶ່ງ ໄດ້ນຳເອົາເບັ້ຽຕົ້ນລານຈາກໂຄງການໄປປູກໄວ້ຢູ່ນຳວັດຕ່າງໆເຊັ່ນ :

- ວັດປ່າ ບ້ານນາຄູນນ້ອຍ ເມືອງນາຊາຍທອງ ກຳແພງນະຄອນວຽງຈັນ ຈຳນວນ 10 ຕົ້ນ
- ວັດບ້ານໜອງວຽງຄຳ ເມືອງໄຊທານີ ກຳແພງນະຄອນວຽງຈັນ ຈຳນວນ 2 ຕົ້ນ
- ວັດບ້ານສະພັງມຶກ ເມືອງໄຊທານີ ກຳແພງນະຄອນວຽງຈັນ 3 ຕົ້ນ
- ວັດປ່າພູເຂົາຄວາຍ ເມືອງທຸລະຄົມ ແຂວງວຽງຈັນ ຈຳນວນ 14 ຕົ້ນ



*ວັດປ່ານາຄູນນ້ອຍ*



*ວັດພູເຂົາຄວາຍ*

ການປູກຕົ້ນລານໄວ້ທີ່ວັດດັ່ງກ່າວ ກໍ່ເພື່ອເປັນການອະນຸລັກ ແລະ ຟື້ນຟູຊີວິດຂອງຕົ້ນລານ ຊຶ່ງປັດຈຸບັນກໍ່ແມ່ນຫາຍາກ ແລະ ນັບມື້ຈະສູນຫາຍ ເຖິງວ່າການປູກຕົ້ນລານຈະເປັນພຽງສັນຍາລັກຂອງໂຄງການ ແຕ່ກໍ່ຈະໃຫ້ຜົນໃນໄລຍະຕໍ່ຫນ້າ ເຊິ່ງອາດໃຊ້ເວລາເຖິງ 20-30 ປີ ຈຶ່ງຈະໃຊ້ການໄດ້.

ນັບວ່າເປັນນິມິດຫມາຍອັນດີຕໍ່ອະນຸຊົນຈະໄດ້ເຫັນຕົວຈິງຂອງໃບລານຢູ່ນຳຕົ້ນ ກໍ່ຄືວັດຖຸທີ່ນຳໃຊ້ໃນສະໄຫມກ່ອນ ແລະ ສືບທອດມາຮອດປັດຈຸບັນ.

ການກ້າເບັ້ຽຕົ້ນລານຈຳນວນຫລາຍສິບຕົ້ນໃນຊຸດນີ້ເກີດຫມາກຜົນຕົວຈິງຂຶ້ນມາໄດ້ ກໍ່ຍ້ອນ ຄວາມພາກພຽນຂອງລຸງຈານ ທອງເຊີຍ ພະນັກງານຢູ່ຫໍສະຫມຸດແຫ່ງຊາດ ຊຶ່ງເປັນຜູ້ຕິດພັນຢູ່ກັບ ການຂຽນ ແລະ ຈານໃບລານມາດົນ ຫລືງເຫັນວ່າ ຄວນຈະຊ່ວຍກັນສືບຕໍ່ອາຍຸຂອງຕົ້ນລານເອົາໄວ້ ເພາະນັບມື້ນັບຫາຍາກແລ້ວ.

ເປັນທີ່ຮູ້ກັນວ່າ ຕົ້ນລານເປັນຕົ້ນໄມ້ປະເພດຕົ້ນປາມ ຄ້າຍຄືຕົ້ນຕານ ມີອາຍຸຍືນຮອດ 40-50 ປີ. ອອກດອກ - ໝາກຄັ້ງດຽວເປັນຈຳນວນຫລວງຫລາຍໃນລະຍະທີ່ເປັນຕົ້ນແກ່ແລ້ວ ຈາກນັ້ນກໍ່ຈະຕາຍໄປທັນທີ. ຕົ້ນລານມີປະໂຫຍດຫລາຍຢ່າງ ຕົ້ນລານຊະນິດໃບນ້ອຍ (ລານຂີ້ໄກ່) ຍັງ ໃຊ້ໄດ້ທັງກ້ານ ແລະ ໃບ. ກ້ານ ເພິ່ນໃຊ້ເຮັດຮວງຄຸ/ປ່ອມ ແມ່ນດີທີ່ສຸດ ສ່ວນໃບກໍ່ເອົາໄປສານຫມວກສານເຄື່ອງໃຊ້ອື່ນໆອີກ.

*( ກອງປະຊຸມ..) ຕໍ່ຈາກໜ້າ 5*

ຂອງປະຊາຊົນແມ່ນເຮັດນາ, ເຮັດສວນ ແລະ ຄ້າຂາຍ. ອີງຕາມເຖົ້າແກ່ເວົ້າສືບກັນມາວ່າ : ກ່ອນຈະເປັນຊື່ບ້ານຊອກແມ່ນຍາພໍ່ພົ້ມ ຕຶກເບັດຢູ່ແຄມນ້ຳຂອງ ງອຍຫີນພະພົ້ມຢູ່ທີ່ບ້ານດອນເຊັງ ປາເຂັງຄຳຖືກເບັດເພິ່ນຊິດເບັດຄືນຫລັງທັງແຮງ ປາເຂັງຄຳເລີຍລຸດຈາກເບັດ. ຍາພໍ່ພົ້ມໄປຊອກຫາປາໂຕນັ້ນຢູ່ທີ່ບໍລິເວນບ້ານຊອກ ປັດຈຸບັນແຕ່ບໍ່ພົບໄປຊອກທີ່ໜອງເຕົ່າ ແລະ ຫນອງເຂັງກໍ່ບໍ່ພົບ ບາດພົບແທ້ແມ່ນທີ່ດົງເຫັນພຸ້ນ. ອັນນີ້ແມ່ນອີງຕາມນິທານພື້ນບ້ານຊອກ. ປະຊາຊົນຊາວບ້ານນິຍົມປູກຕົ້ນພ້າວ, ຕົ້ນຫມາກ ຈຶ່ງມີຕົ້ນພ້າວຫລາຍເປັນພິເສດ, ບ້ານຊອກແມ່ນເປັນທີ່ມາຂອງຈັງຫວະຂັບລຳທ້ອງຖິ່ນອີກປະເພດນຶ່ງນັ້ນຄື : **ລຳບ້ານຊອກ.**

ການສຳຫລວດຫນັງສືໃບລານຢູ່ວັດໂພໄຊ ບ້ານຊອກນີ້ມີປະຊາຊົນເຂົ້າຮ່ວມເຮັດອະນາໄມ 60 ເທື່ອຄົນ ມີໜັງສືທັງຫມົດ 784 ຜູກ, ພາຍຫລັງປົກປັກຮັກສາແລ້ວ ກໍ່ໄດ້ຈັດຕັ້ງມອບຫມາຍໃຫ້ບຸກຄົນຮັບຜິດຊອບ ຄືພໍ່ເຖົ້າຈານດວງ, ພໍ່ພົມພາ ແນວໂຮມບ້ານ ແລະ ຄູບາພອນ ເຈົ້າອະທິການວັດສືບຕໍ່ໄປ. ❞

## *ໂຄງອາຍຸຄົນ*

*ຈາກລຸງທິດບາງ ເຜົ່າກະເລີງ ບ້ານຜາໂຄ້ງ ເມືອງໄຊບົວທອງ ແຂວງຄຳມ່ວນ*

*(ເກັບກຳໂດຍ ຄຳສິງ ວົງສະຫວ່າງ)*

| | | | |
|---|---|---|---|
| ອາຍຸ 10 ປີ: | ອາບນ້ຳບໍ່ໜາວ | ອາຍຸ 60 ປີ: | ບວດເປັນຍາຕາຢູ່ວັດ ( ໃຫ້ຖືສິນ ) |
| ອາຍຸ 20 ປີ: | ແອ່ນສາວບໍ່ຢ້ານ | ອາຍຸ 70 ປີ: | ຍ່າງປະທັດບໍ່ທັນແຮງ |
| ອາຍຸ 30 ປີ: | ເຂົ້າບ້ານບໍ່ລັກອາຍ | ອາຍຸ 80 ປີ: | ຄວາມເວົ້າບໍ່ແຂງກ້າ |
| ອາຍຸ 40 ປີ: | ເຫັນຜີຕາຍບໍ່ຂີ້ດຽດ | ອາຍຸ 90 ປີ: | ຢີ້ຂົ້ນຄ່ອນບໍ່ເຖິງ |
| ອາຍຸ 50 ປີ: | ມີຄວາມຄຽດຮ້າຍຮູ້ພິຈາລະນາ | ອາຍຸ 100 ປີ: | ເຖົ້າບໍ່ເຖົ້າກໍຕາຍ( ກໍ່ຊໍ່າຕາຍ ) |

**ເຈົ້າຂອງ**

***ໂຄງການປົກປັກຮັກສາໜັງສືໃບລານລາວ***
***(ການຮ່ວມມືລາວ-ເຢຍຣະມັນ)***

**ສຳນັກງານຕັ້ງຢູ່**

***ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ***
***ຫໍສະໝຸດແຫ່ງຊາດ***
***ຖະໜົນເຊດຖາທິຣາດ (ປ້ຳພູ)***

**ຕູ້ປ.ນ. 8818**
**ໂທ: (856-21) 251 405**
**ແຟັກ: (856-21) 213 029**
**E-mail : bailane@laotel.com**

**ຄະນະຈັດທຳ**

| | |
|---|---|
| **ທີ່ປຶກສາ** | **: ດາລາ ກັນລະຍາ** |
| | **: ບຸນຍົກ ແສນສູນທອນ** |
| **ຫົວໜ້າ ບ.ກ** | **: ກົງເດືອນ ເນດຕະວົງ** |
| **ຮອງຫົວໜ້າ ບ.ກ** | **: ບຸນເລີດ ທຳມະຈັກ** |
| **ຈັດໜ້າ ຄອມພິວເຕີ** | **: ສີສຸພັນ ດວງມະນີ** |
| **ຕີພິມ ຄອມພິວເຕີ** | **: ບົວສີ ສີປະເສີດ** |
| **ຖ່າຍພາບ** | **: ຄຳແສງດາວ ປະຖົມມະວົງ** |
| | **: ຄຳສິງ ວົງສະຫວ່າງ** |
| | **: ໄພວົງ ທັງສັກສິດ** |
| | **: ຄຳມຸກ ສີລືອາໄພ** |